# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-23 ເມສາ 2025
ປີທີ 14
ສະບັບທີ 1014
ລາຍສັປປະດາ


## ຮຽບຮຽງຄືນເນື້ອໃນກົດໝາຍ 3 ສະບັບ ຂົງເຂດ ສພຊ



(ສພຊ) - ວັນທີ 9-10 ເມສານີ້ ໄດ້ມີກອງປະຊຸມຮຽບຮຽງຄືນບັນດາເນື້ອໃນຂອງກົດໝາຍ 3 ສະບັບ ຂົງເຂດສະພາແຫ່ງຊາດ (ສພຊ) ຄື: ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ແລະ ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານໃນຄະນະປະຈຳສະພາແຫ່ງຊາດ, ຮອງປະທານກຳມາທິການຂອງ ສພຊ, ທ່ານ ປອ. ລີຈີນໍ ພາສະທຣານາ ຊ່ຽວຊານອາວຸໂສຈາກແຜນງານການເສີມສ້າງລັດແຫ່ງກົດໝາຍ, ການເຂົ້າເຖິງຄວາມຍຸຕິທຳແລະການປົກຄອງທີ່ດີພ້ອມດ້ວຍພະນັກງານຈາກພາກສ່ວນກ່ຽວຂ້ອງຈຳນວນໜຶ່ງ.

ໃນກອງປະຊຸມຮຽບຮຽງບັນດາກົດໝາຍດັ່ງກ່າວ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ເນັ້ນໜັກເຖິງຄວາມສຳຄັນໃນການປັບປຸງຄືນບັນດາເນື້ອໃນຂອງກົດໝາຍ ເພື່ອໃຫ້ສອດຄ່ອງກັບລັດຖະທຳມະນູນ (ສະບັບປັບປຸງປີ 2025) ແລະ ບັນດາກົດໝາຍທີ່ກ່ຽວຂ້ອງທີ່ໄດ້ຮັບຮອງໃນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX.

ບັນດາຜູ້ແທນເຂົ້າຮ່ວມກອງປະຊຸມ ໄດ້ຍົກສູງຄວາມຮັບ

ອ່ານຕໍ່ໜ້າ 2

## ສຳເລັດກອງປະຊຸມໃຫຍ່ສະມາຊິກສະຫະພັນແມ່ຍິງ ສພຊ ຄັ້ງທີ VI



(ສພຊ) - ກອງປະຊຸມໃຫຍ່ສະມາຊິກສະຫະພັນແມ່ຍິງສະພາແຫ່ງຊາດ (ສພຊ) ຄັ້ງທີ VI ໄດ້ຈັດຂຶ້ນໃນຕອນເຊົ້າ ແລະ ປິດລົງດ້ວຍຜົນສຳເລັດຢ່າງຈົບງາມໃນຕອນບ່າຍວັນພຸດທີ 2 ເມສານີ້ ໂດຍການເປັນປະທານຂອງສະຫາຍ ນາງ ມະນີວັນ ເຍຍປາວເຮີ ກຳມະການຄະນະບໍລິຫານ

ອ່ານຕໍ່ໜ້າ 2



ແນວຄິດຂອງປະທານ
ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ການຄົມມະນາຄົມຂົນສົ່ງ ເປັນຂະແໜງການປາຍແຫຼມ ເຊິ່ງບໍ່ພຽງແຕ່ມີຄວາມສຳຄັນດ້ານເສດຖະກິດ ຊີວິດການເປັນຢູ່ຂອງປະຊາຊົນເທົ່ານັ້ນ, ມັນຍັງມີຄວາມສຳຄັນຍິ່ງດ້ານປ້ອງກັນຊາດ, ການເມືອງ ແລະ ວັດທະນະທຳອີກດ້ວຍ.

(ນິພົນເລືອກເຟັ້ນ ເຫຼັ້ມ II, ໜ້າ 218 ຂອງປະທານ ໄກສອນ ພົມວິຫານ)

ຖ້າວ່າບໍ່ຂະຫຍາຍກະສິກຳແລ້ວ ກໍຈະບໍ່ມີສະບຽງອາຫານເພື່ອຂະຫຍາຍປ່າໄມ້. ກົງກັນຂ້າມ ຖ້າວ່າບໍ່ຂະຫຍາຍປ່າໄມ້ແລ້ວ ກໍຈະບໍ່ມີສິ່ງແວດລ້ອມ ເພື່ອປົກປັກຮັກສາກະສິກຳ ແລະ ເພື່ອດຳເນີນກະເສດສຸມໄດ້. ຍ້ອນແນວນັ້ນ, ຕ້ອງຂະຫຍາຍທັງກະສິກຳ, ທັງປ່າໄມ້ ຈຶ່ງສາມາດສ້າງພື້ນຖານອັນໜັກແໜ້ນໃຫ້ແກ່ການຫັນເປັນອຸດສາຫະກຳໄດ້.

(ນິພົນເລືອກເຟັ້ນ ເຫຼັ້ມ II, ໜ້າ 259 ຂອງປະທານ ໄກສອນ ພົມວິຫານ)

ອ່ານຕໍ່ສະບັບໜ້າ

## ສະຫາຍ ສົມມາດ ພົລເສນາ ຕ້ອນຮັບ ປະທານກຸ່ມບໍລິສັດ COMAC



ອ່ານຕໍ່ໜ້າ 2

## ຄະນະຜູ້ແທນສະພາແຫ່ງຊາດ ສຳເລັດການເຂົ້າຮ່ວມກອງປະຊຸມໃຫຍ່ IPU ຄັ້ງທີ 150




(ສພຊ) - ໃນລະຫວ່າງວັນທີ 4-9 ເມສາ 2025, ທ່ານ ສັນຍາ ປຣະເສີດ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມໃຫຍ່ສະຫະພັນລັດຖະສະພາສາກົນ (IPU) ຄັ້ງທີ 150 ທີ່ນະຄອນຫຼວງທັດສະເກນ, ປະເທດອຸດສະເບກິດສະຖານໂດຍມີຄະນະຜູ້ແທນ 1,749 ຄົນ ຈາກ 152 ປະເທດ ທີ່ເປັນສະມາຊິກ IPU, ປະເທດສັງເກດການ, ຕົວແທນຈາກອົງການສະຫະປະຊາຊາດ, ອົງການລັດຖະສະພາປະຈຳພາກພື້ນຕ່າງໆ ແລະ ບັນດາອົງການຈັດຕັ້ງສາກົນ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ກອງປະຊຸມໃຫຍ່ຄັ້ງນີ້ ໄດ້ດຳເນີນພາຍໃຕ້ຫົວຂໍ້: "ລັດ

ອ່ານຕໍ່ໜ້າ 7

## 3 ພາກສ່ວນ ມອບເຄື່ອງໃຫ້ ກປຊສ



ອ່ານຕໍ່ໜ້າ 12




ພຶດຕິກຳ 6... (ໜ້າ 8)


ສະພາແຫ່ງຊາດ... (ໜ້າ 10)



ບັນຫາ ແລະ ສິ່ງທ້າທາຍ... (ໜ້າ 12)



## ຮຽບຮຽງ...

(ຕໍ່ຈາກໜ້າ 1)

ຜົດຊອບໃນການປັບປຸງກົດໝາຍດັ່ງກ່າວ ເພື່ອຈະໄດ້ລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດໃນຕໍ່ໜ້ານີ້; ນອກຈາກນັ້ນ, ບັນດາຜູ້ເຂົ້າຮ່ວມຍັງໄດ້ຮັບຟັງບົດຮຽນກ່ຽວກັບການປັບປຸງກົດໝາຍຂອງອົງການນິຕິບັນຍັດປະເທດຟີລິບປິນ.

**(ນາງ ອາລິນ ສຸພົມມະປະກົດ)**




## ສຳເລັດ...

(ຕໍ່ຈາກໜ້າ 1)

ງານສູນກາງສະຫະພັນແມ່ຍິງລາວ, ປະທານຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ, ມີສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ, ສະຫາຍ ນາງ ອາລີ ວົງໜໍ່ບຸນທຳ ກຳມະການສູນກາງພັກ, ປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ບັນດາປ້າອາວຸໂສບຳນານ, ຜູ້ແທນສົມບູນ, ຄະນະໜ່ວຍພັກຮາກຖານ, ອົງການຈັດຕັ້ງມະຫາຊົນຂອງສະພາແຫ່ງຊາດ ແລະ ແຂກຖືກເຊີນ ເຂົ້າຮ່ວມຫຼາຍກວ່າ 160 ສະຫາຍ.

ກອງປະຊຸມໃຫຍ່ ໄດ້ຄົ້ນຄວ້າ, ປຶກສາຫາລື ແລະ ແລກປ່ຽນຄວາມເຫັນຢ່າງກົງໄປກົງມາຕໍ່ເນື້ອໃນກອງປະຊຸມ ດ້ວຍບັນຍາກາດຟົດຟື້ນ ແລະ ມີຄວາມເປັນເອກະພາບສູງ ໂດຍໄດ້ຮັບຮອງເອົາເນື້ອໃນສຳຄັນຕົ້ນຕໍຄື: ຮ່າງບົດລາຍງານການເມືອງສະຫະພັນແມ່ຍິງສະພາແຫ່ງຊາດ ຕໍ່ກອງປະຊຸມໃຫຍ່ຄັ້ງທີ VI ເຊິ່ງໄດ້ສະຫຼຸບຕີລາຄາຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ V ຂອງສະຫະພັນແມ່ຍິງສະພາແຫ່ງຊາດ ໃນໄລຍະ 6 ປີຜ່ານມາ, ເຊິ່ງກອງປະຊຸມໄດ້ສະແດງຄວາມຊົມເຊີຍຕໍ່ບັນດາຜົນງານຜົນສຳເລັດທີ່ຍາດມາໄດ້ ແລະ ເປັນເອກະພາບຕໍ່ບັນດາຈຸດອ່ອນ-ຂໍ້ຄົງຄ້າງໃນການເຄື່ອນໄຫວວຽກງານ; ພ້ອມນີ້, ຍັງໄດ້ພ້ອມກັນຄົ້ນຄວ້າຊອກຫາສາເຫດຕົ້ນຕໍທີ່ພາໃຫ້ມີຈຸດອ່ອນ-ຂໍ້ຄົງຄ້າງເພື່ອຖອດຖອນບົດຮຽນ ແລະ ປັບປຸງແກ້ໄຂໃນຕໍ່ໜ້າ. ກອງປະຊຸມມີຄວາມເປັນເອກະພາບສູງຕໍ່ທິດທາງວຽກງານໃນໄລຍະ 5 ປີ (2025-2030) ໂດຍກຳນົດມີ 5 ທິດທາງລວມ, 8 ຄາດໝາຍສູ້ຊົນ ແລະ 11 ວຽກງານແຕ່ລະດ້ານຂອງຄະນະສະຫະພັນແມ່ຍິງສະພາແຫ່ງຊາດ ແລະ ຮັບຮອງເອົາບົດສຳຫຼວດການນຳພາລວມຂອງຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ ຊຸດທີ V ເຊິ່ງໄດ້ຕີລາຄາດ້ານດີ, ດ້ານອ່ອນ-ຂໍ້ຄົງຄ້າງ ແລະ ບົດຮຽນຖອດຖອນໄດ້ຈຳນວນໜຶ່ງ ພ້ອມທັງສະເໜີມາດຕະການແກ້ໄຂດ້ານອ່ອນ-ຂໍ້ຄົງຄ້າງດັ່ງກ່າວ ເພື່ອເສີມຂະຫຍາຍບົດບາດນຳພາຂອງຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດໃນຕໍ່ໜ້າ.

ຜູ້ແທນສົມບູນ ຈຳນວນ 132 ສະຫາຍ ໄດ້ໃຊ້ສິດປະຊາທິປະໄຕປ່ອນບັດຄັດເລືອກເອົາຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດສະໄໝທີ VI ລວມມີ 9 ສະຫາຍ ເຊິ່ງປະກອບດ້ວຍຜູ້ທີ່ມີມາດຕະຖານ, ເງື່ອນໄຂຄົບຖ້ວນ ເພື່ອສືບຕໍ່ນຳພາຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກສະພາແຫ່ງຊາດ, ມະຕິກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດໃຫ້ມີຜົນສຳເລັດຕາມລະດັບຄາດໝາຍ. ກອງປະຊຸມຄົບຄະນະຄັ້ງປະຖົມມະລຶກຂອງຄະນະສະຫະພັນແມ່ຍິງສະພາແຫ່ງຊາດ ຄັ້ງທີ VI ໄດ້ເປັນເອກະສັນເລືອກຕັ້ງເອົາສະຫາຍ ນາງ ວິໄຊ ສຣິດທິຣາດເປັນປະທານ, ສະຫາຍນາງ ກົງນະຄອນ ຈັນທະກຸມມານ ເປັນຮອງປະທານ ທັງເປັນປະທານກວດກາ, ສະຫາຍ ນາງກັນທິນາ ປ້ານອິນທອນ ເປັນຮອງປະທານ, ສະຫາຍ ນາງນິດແກ້ວ ຄຳມີເປັນຮອງປະທານ, ສະຫາຍ ນາງອ້ອມປະຊາ ໄຊຍະກຸມມານ ເປັນຮອງປະທານກວດກາ, ສະຫາຍ ນາງ ເພັດສາຄອນ ອຸ່ນມີໄຊ, ສະຫາຍນາງ ໄກສອນແກ້ວ ມະນີໂຄດ, ສະຫາຍ ນາງ ສີສະໝຸດ ຈັນທະວົງ ແລະ ສະຫາຍ ນາງ ມະນີວັນ ລົດສົມພານ ເປັນຄະນະ; ເລືອກເອົາຜູ້ແທນສົມບູນ, ສຳຮອງ ໄປຮ່ວມກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ ຄັ້ງທີ IX ຈຳນວນ 4 ສະຫາຍ ຄື: ສະຫາຍ ນາງ ວິໄຊ ສຣິດທິຣາດ, ສະຫາຍ ນາງ ກົງນະຄອນ ຈັນທະກຸມມານ, ສະຫາຍ ນາງ ກັນທິນາ ປ້ານອິນທອນ ແລະ ສະຫາຍ ນາງ ນິດແກ້ວ ຄຳມີ (ຜູ້ແທນສຳຮອງ).

ກອງປະຊຸມໃຫຍ່ໄດ້ຮັບຟັງການໂອ້ລົມຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເຊິ່ງສະຫາຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ມີຄຳເຫັນຊີ້ນຳສຸດທີ່ມີຄວາມໝາຍສຳຄັນເຊິ່ງເປັນທິດເຍືອງທາງ, ເປັນການມອບໝາຍໜ້າທີ່ໃຫ້ຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ ໃນການນຳພາ-ຊີ້ນຳສະມາຊິກສະຫະພັນແມ່ຍິງ ຈັດຕັ້ງປະຕິບັດທິດທາງໜ້າທີ່ວຽກງານຈຸດສຸມໃນ 5 ປີຕໍ່ໜ້າ ໃຫ້ປະສົບຜົນສຳເລັດຕາມລະດັບຄາດໝາຍ.

ກອງປະຊຸມໃຫຍ່ຮຽກຮ້ອງມາຍັງຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ, ສະມາຊິກສະຫະພັນແມ່ຍິງທຸກສະຫາຍ ຈົ່ງເຊີດຊູຄວາມເປັນແບບຢ່າງນຳໜ້າໃນທຸກດ້ານ, ຮຽກຮ້ອງມາຍັງໜ່ວຍແມ່ຍິງຮາກຖານໃນທົ່ວສະພາແຫ່ງຊາດ ຈົ່ງເສີມຂະຫຍາຍມູນເຊື້ອຮັກຊາດອັນດູດດື່ມ ບົນຈິດໃຈເອກະລາດ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເພິ່ງຕົນເອງ, ເປັນເຈົ້າຕົນເອງ ປະກອບສ່ວນທາງດ້ານສະຕິປັນຍາ ແລະ ເຫື່ອແຮງເຂົ້າໃນການພັດທະນາວຽກງານສະພາແຫ່ງຊາດ ໃຫ້ເຕີບໃຫຍ່ ແລະ ເຂັ້ມແຂງຢ່າງບໍ່ຢຸດຢັ້ງ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**



## ສະຫາຍ...

(ຕໍ່ຈາກໜ້າ 1)

(ສພຊ) - ຕອນສວາຍວັນທີ 11 ເມສານີ້, ສະຫາຍ ສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຮັບການເຂົ້າຢ້ຽມຂຳນັບຂອງສະຫາຍ ເຫີ ຕົງເຟີງ (He Dongfeng) ກຳມະການສຳຮອງສູນກາງພັກກອມມູນິດຈີນ, ປະທານກຸ່ມບໍລິສັດ COMAC ພ້ອມດ້ວຍຄະນະໃນໂອກາດນຳພາຄະນະຜູ້ແທນເດີນທາງມາຢ້ຽມຢາມ ແລະ ເຂົ້າຮ່ວມການປະຕິບັດຖ້ຽວບິນປະຖົມມະລຶກຂອງເຮືອບິນ C909 ທີ່ລັດວິສາຫະກິດການບິນລາວ ໄດ້ຮັບເຂົ້າສູ່ຝູງບິນຢ່າງເປັນທາງການ; ສະຫາຍ ສົມມາດ ພົລເສນາ ໄດ້ສະແດງຄວາມປິຕິຍິນດີທີ່ໄດ້ພົບປະ ພ້ອມທັງຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຄື່ອນໄຫວວຽກງານໃນຄັ້ງນີ້ ນອກຈາກຈະເປັນການສືບຕໍ່ຮັດແໜ້ນ ແລະ ປະກອບສ່ວນເພີ່ມທະວີສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມລາວ-ຈີນ, ຈີນ-ລາວ ຍັງເປັນການຊຸກຍູ້ສົ່ງເສີມການບໍລິການດ້ານການບິນໂດຍສານລະຫວ່າງປະເທດຂອງ ສປປລາວ.

ສະຫາຍຮອງປະທານສະພາແຫ່ງຊາດ ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດກ່ຽວກັບອຸດສາຫະກຳການບິນຂອງ ສປຈີນ ທີ່ສາມາດຜະລິດເຮືອບິນໂດຍສານໂດຍໃຊ້ຫົວຈັກ Turbofan ທີ່ໄດ້ຄົ້ນຄວ້າຜະລິດດ້ວຍຕົນເອງຂຶ້ນມາ, ສາມາດເດີນທາງລະຫວ່າງ 2,225-3,700 ກິໂລແມັດ ເຊິ່ງເປັນການປະກອບສ່ວນໃນການພັດທະນາອຸດສາຫະກຳການບິນທົ່ວໂລກ; ໄດ້ສະແດງໃຫ້ເຫັນເຖິງຄວາມຮູ້, ຄວາມສາມາດ, ສະມັດຖະພາບທາງດ້ານເຕັກໂນໂລຊີ ແລະ ບົດບາດການບໍລິການດ້ານອຸດສາຫະກຳການບິນຂອງ ສປຈີນ ກ້າວເຂົ້າສູ່ລະດັບສາກົນ ແລະ ຍັງໄດ້ຮັບຄວາມນິຍົມຊົມຊອບຈາກຕະຫຼາດທັງພາຍໃນ ແລະ ຕ່າງປະເທດທົ່ວໂລກ.

ສະຫາຍ ເຫີ ຕົງເຟີງ ໄດ້ສະແດງຄວາມຂອບໃຈຕໍ່ຮອງປະທານສະພາແຫ່ງຊາດ ທີ່ໄດ້ໃຫ້ການຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ຈີນ-ລາວ ພ້ອມທັງແຈ້ງໃຫ້ຊາບສະພາບການທີ່ພົ້ນເດັ່ນຂອງສປຈີນ ໂດຍສະເພາະຂໍ້ມູນຂອງກຸ່ມບໍລິສັດ COMAC ໃນການພັດທະນາອຸດສາຫະກຳການບິນຂອງສປຈີນ ແລະ ການຮ່ວມມືລະຫວ່າງບໍລິສັດ COMAC ກັບ ລັດວິສາຫະກິດການບິນລາວ ເຊິ່ງເປັນຂີດໝາຍອັນສຳຄັນໃນການເພີ່ມທະວີການຮ່ວມມືດ້ານການຂົນສົ່ງທາງອາກາດໃນອະນາຄົດລະຫວ່າງສອງປະເທດໃຫ້ເຂົ້າສູ່ລວງເລິກ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

## ໂຮງຮຽນອິດສະຫຼະພອນຢ້ຽມຊົມຫ້ອງມູນເຊື້ອສະພາແຫ່ງຊາດ



(ສພຊ) - ຕອນສວາຍວັນທີ 28 ມີນານີ້, ກົມສື່ມວນຊົນ ແລະ ຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ໄດ້ຕ້ອນຮັບ ແລະ ນຳພານັກຮຽນໂຮງຮຽນ ອິດສະຫຼະພອນ ທີ່ມາທັດສະນະສຶກສາຢ້ຽມຊົມຫໍມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ຂອງສະພາແຫ່ງຊາດ ຈຳນວນ 90 ຄົນ ເຊິ່ງນຳໂດຍ ທ່ານນາງ ພອນມະນີ ໄຊຍະວົງ ຜູ້ອຳນວຍການໂຮງຮຽນດັ່ງກ່າວ.

ການມາຢ້ຽມຊົມຄັ້ງນີ້, ໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆໃນປະຫວັດສາດ, ຢ້ຽມຊົມການວາງສະແດງຮູບພາບ ແລະ ວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດຊຸດທີ I ເຖິງ ສະພາແຫ່ງຊາດຊຸດປັດຈຸບັນ (ຊຸດທີ IX) ແລະ ຢ້ຽມຊົມຫ້ອງປະຊຸມໃຫຍ່ຂອງສະພາແຫ່ງຊາດ ເຮັດໃຫ້ນ້ອງໆນັກຮຽນ, ຄູ-ອາຈານ ມີຄວາມຮັບຮູ້ເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການນິຕິບັນຍັດຫຼາຍຂຶ້ນ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ສພຂ ໄຊຍະບູລີ ເລືອກຜູ້ແທນສົມບູນ-ສຳຮອງ ເຂົ້າຮ່ວມກອງປະຊຸມໃຫຍ່ອົງຄະນະພັກແຂວງ



(ສພຂ) - ວັນທີ 27 ມີນາຜ່ານມາ, ໜ່ວຍພັກສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ໄດ້ເປີດກອງປະຊຸມເລືອກຕັ້ງເອົາຜູ້ແທນສົມບູນ-ສຳຮອງ ເຂົ້າຮ່ວມກອງປະຊຸມໃຫຍ່ຄະນະບໍລິຫານງານພັກແຂວງໄຊຍະບູລີ ຄັ້ງທີ VIII ພາຍໃຕ້ການເປັນປະທານຂອງສະຫາຍ ນາງ ວິລະພອນ ທອງພິມ ກຳມະການພັກແຂວງ, ເລຂາໜ່ວຍພັກ ສພຂ ໂດຍການເຂົ້າຮ່ວມຂອງສະຫາຍ ສົມຫວັງ ແກ້ວວິໄລສັກ ຄະນະປະຈຳພັກແຂວງ, ປະທານຄະນະກວດກາພັກແຂວງ, ປະທານອົງການກວດກາລັດແຂວງ ທັງເປັນຫົວໜ້າອົງການຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫຼວງຂອງແຂວງ.

ກອງປະຊຸມໄດ້ຮັບຟັງແຈ້ງການຂອງຄະນະຈັດຕັ້ງສູນກາງພັກ ວ່າດ້ວຍການດຳເນີນກອງປະຊຸມໃຫຍ່ຮາກຖານພັກສະພາປະຊາຊົນແຂວງ-ນະຄອນຫຼວງ; ຜ່ານມະຕິຕົກລົງຂອງຄະນະປະຈຳພັກແຂວງ ວ່າດ້ວຍການອະນຸມັດໃຫ້ໜ່ວຍພັກສະພາປະຊາຊົນແຂວງ ເປີດກອງປະຊຸມສະມາຊິກພັກ ເລືອກຕັ້ງຜູ້ແທນສົມບູນ-ສຳຮອງ ເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງໄຊຍະບູລີ ຄັ້ງທີ VIII; ເຊື່ອມຊຶມຄຳແນະນຳຂອງຄະນະປະຈຳພັກແຂວງ ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ອົງຄະນະພັກແຂວງ, ເມືອງ, ອົງຄະນະພັກປກຊ-ປກສ, ຄະນະພັກຮາກຖານ, ໜ່ວຍພັກຮາກຖານສຳນັກງານ-ອົງການອ້ອມຂ້າງແຂວງ, ເມືອງ ແລະ ຮາກຖານບ້ານ ໃນທົ່ວແຂວງໄຊຍະບູລີແລະເອກະສານກ່ຽວກັບມາດຕະຖານ, ເງື່ອນໄຂຜູ້ສະໝັກເລືອກຕັ້ງເປັນຜູ້ແທນສົມບູນ-ສຳຮອງ ເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງໄຊຍະບູລີ ຄັ້ງທີ VIII. ຈາກນັ້ນ, ຜູ້ແທນສົມບູນໄດ້ພ້ອມກັນໃຊ້ສິດປະຊາທິປະໄຕຂອງຕົນ ປ່ອນບັດເລືອກຕັ້ງເອົາຜູ້ແທນສົມບູນ-ສຳຮອງເຊິ່ງສາມາດເລືອກໄດ້ຜູ້ແທນສຳບູນ 4 ສະຫາຍ ແລະ ສຳຮອງ 1 ສະຫາຍ.

ສະຫາຍ ສົມຫວັງ ແກ້ວວິໄລສັກ ມີຄຳເຫັນໂອ້ລົມຕໍ່ທີ່ປະຊຸມ ໂດຍໄດ້ຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດໃນການນຳພາ-ຊີ້ນຳຂອງໜ່ວຍພັກສະພາປະຊາຊົນແຂວງແລະໃຫ້ທິດຊີ້ນຳບາງບັນຫາສຳຄັນດັ່ງນີ້: ບັນດາສະຫາຍທີ່ໄດ້ຮັບການເລືອກຕັ້ງຄັ້ງນີ້ ແມ່ນສະແດງເຖິງຄວາມເຊື່ອໝັ້ນໄວ້ວາງໃຈຂອງສະມາຊິກພັກ ທີ່ໄດ້ເລືອກຕັ້ງ ແລະ ມອບຄວາມຮັບຜິດຊອບໃນການເປັນຕົວແທນເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງໄຊຍະບູລີ ຄັ້ງທີ VIII ເພື່ອສືບຕໍ່ ນຳເອົາເນື້ອໃນຈິດໃຈຂອງກອງປະຊຸມມາຜັນຂະຫຍາຍ ແລະ ນຳພາຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳຢູ່ພາຍໃນໜ່ວຍພັກຂອງຕົນ; ສືບຕໍ່ເພີ່ມທະວີການນຳພາໜ່ວຍພັກປັບປຸງການຈັດຕັ້ງໃນຄວາມຮັບຜິດຊອບຂະແໜງການຂອງຕົນໃຫ້ມີຄວາມເຂັ້ມແຂງ, ສຶກສາອົບຮົມການເມືອງ-ແນວຄິດດ້ວຍການຄົ້ນຄວ້າເຊື່ອມຊຶມແນວທາງນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ລະບຽບກົດໝາຍຂອງລັດ ໃຫ້ມີເນື້ອໃນເລິກເຊິ່ງເພື່ອສ້າງຄວາມເປັນເອກະພາບດ້ານແນວຄິດ, ທັດສະນະ ແລະ ແທດກັບຕົວຈິງ ເຮັດໃຫ້ຄະນະພັກ, ສະມາຊິກພັກ, ພະນັກງານມີລະບຽບວິໄນເຂັ້ມງວດ, ເຝິກຝົນຫຼໍ່ຫຼອມຕົນເອງໃຫ້ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຈົງຮັກພັກດີຕໍ່ການນຳພາຂອງພັກ, ປະເທດຊາດ ແລະ ປະຊາຊົນ; ສືບຕໍ່ປັບປຸງແບບແຜນການນຳພາ ແລະ ວິທີເຮັດວຽກໃຫ້ເປັນລະບົບ ໂດຍຍຶດໝັ້ນຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ມີການແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນຢ່າງຈະແຈ້ງ; ຕັ້ງໜ້າເສີມຂະຫຍາຍປະຊາທິປະໄຕພາຍໃນພັກ ຕິດພັນກັບການເພີ່ມທະວີຄວາມເຂັ້ມງວດດ້ານລະບຽບວິໄນ ແລະຍົກສູງຄວາມຮັບຜິດຊອບການເມືອງຂອງຄະນະພັກແຕ່ລະສະຫາຍ; ເພີ່ມທະວີຄວາມສາມັກຄີ, ຄວາມເປັນເອກະພາບພາຍໃນໃຫ້ເປັນປຶກແຜ່ນ, ຍົກສູງຄວາມຮັບຜິດຊອບແລະເປັນແບບຢ່າງນຳໜ້າໃນການປະຕິບັດໜ້າທີ່ການເມືອງ ເພື່ອໃຫ້ສົມກັບຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈຂອງຜູ້ແທນກອງປະຊຸມ ກໍຄືຄວາມເຊື່ອຖືໄວ້ວາງ ໃຈຂອງສັງຄົມ.

**(ອິນທີ ຂຽວສີຟ້າ)**




# ສສຂ ເມືອງຊ່ອນ ພົບປະຜູ້ມີສິດເລືອກຕັ້ງ ຢູ່ 4 ບ້ານ



(ສພຂ) - ຕົ້ນເດືອນມີນາຜ່ານມາ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງຊ່ອນ ທ່ານ ວິເຕັ່ງ ຈີ່ໄມເຕັ່ງ ແລະ ທ່ານ ນາງ ມະນີວັນ ວັງລາວົງ ພ້ອມທີມງານ ໄດ້ພົບປະຢ້ຽມຢາມຜູ້ມີສິດເລືອກຕັ້ງຢູ່ບ້ານວັດ, ບ້ານບວກ, ບ້ານຊາຍ ແລະ ບ້ານຊ່ອນເໜືອ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງຫົວພັນ ເຊິ່ງມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 308 ຄົນ, ຍິງ 186 ຄົນ ພ້ອມທັງນຳເອົາເຄື່ອງນຸ່ງຫົ່ມ ຈຳນວນ 200 ຜືນ ລວມມູນຄ່າທັງໝົດ 18 ລ້ານກີບ ມອບໃຫ້ພໍ່ແມ່ປະຊາຊົນພາຍໃນ 4 ບ້ານດັ່ງກ່າວອີກດ້ວຍ.

**(ວົງສາ)**

# ສພຂ ຫົວພັນ ມອບໂທລະໂຄ່ງໃຫ້ບ້ານງົ້ວ



(ສພຂ) - ວັນທີ 28 ມີນາຜ່ານມາ, ສະພາປະຊາຊົນແຂວງ (ສພຂ) ຫົວພັນ ນຳໂດຍທ່ານ ຄອນປະພັນ ເລືອງສີຈັນທອງ ຄະນະປະຈຳພັກແຂວງ, ປະທານ ສພຂ ໄດ້ນຳເອົາໂທລະໂຄ່ງ 1 ຊຸດ ແລະ ຕູ້ລຳໂພງນ້ອຍ 1 ໜ່ວຍ ລວມມູນຄ່າ 18 ລ້ານກີບ ທີ່ໄດ້ຮັບການສະໜັບສະໜູນຈາກສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ໄປມອບໃຫ້ບ້ານງົ້ວ ເມືອງວຽງໄຊ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງບ້ານ ທັງເປັນການຂະຫຍາຍລະບົບຕາໜ່າງໂທລະໂຄ່ງ ແລະ ເຮັດໃຫ້ການກະຈາຍຂໍ້ມູນຂ່າວສານຕ່າງໆ ທົ່ວເຖິງນັບແຕ່ຂັ້ນແຂວງລົງຮອດທ້ອງຖິ່ນ.

**(ເວີນ ແກ້ວບຸນມີ)**

# ລາຍງານຜົນການກວດສອບຂອງພະແນກການທີ່ກ່ຽວຂ້ອງ



(ສພຂ) - ຕອນເຊົ້າວັນທີ 11 ມີນາຜ່ານມາ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງບໍລິຄຳໄຊ ໄດ້ມີກອງປະຊຸມປຶກສາຫາລືວຽກງານ ແລະ ລາຍງານກ່ຽວກັບຜົນການກວດສອບໃນໄລຍະຜ່ານມາຂອງພະແນກການທີ່ກ່ຽວຂ້ອງຂອງແຂວງ ໂດຍການເປັນປະທານຂອງທ່ານ ປອ. ສຸວັນນີ ໄຊຊະນະ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ.

ທ່ານ ປອ. ສົມນຶກ ແກ້ວມະນີ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ໄດ້ລາຍງານຫຍໍ້ກ່ຽວກັບຜົນການກວດສອບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາປະຊາຊົນແຂວງ ສະບັບເລກທີ 04/ສພຂ.ບຊ, ລົງວັນທີ 10 ມັງກອນ 2025, ກວດຄືນຜົນການຈັດຕັ້ງປະຕິບັດຄຳແນະນຳກວດສອບປີຜ່ານມາແລະກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2023 ຂອງແຂວງ; ພ້ອມກັນນັ້ນ, ກໍໄດ້ຮັບຟັງການລາຍງານຈາກພະແນກການທີ່ກ່ຽວຂ້ອງ ກ່ຽວກັບການຈັດຕັ້ງປະຕິບັດຜົນການກວດສອບໃນໄລຍະຜ່ານມາເພື່ອຍົກໃຫ້ເຫັນສະພາບການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີສະດວກ, ຂໍ້ຫຍຸ້ງຍາກ ແລະ ປາກົດການຫຍໍ້ທໍ້ຕ່າງໆເພື່ອນຳມາຄົ້ນຄວ້າປຶກສາຫາລື, ແກ້ໄຂໃຫ້ສອດຄ່ອງຕາມກົດໝາຍ, ລະບຽບການ ແລະ ມາດຕະການຕ່າງໆທີ່ວາງອອກ.

**(ນາງ ໂສລະຢ້າ ໄຊຍະວົງ)**

# ເວທີສົນທະນາພາວະຜູ້ນຳ ເພື່ອສ້າງຄວາມເຂັ້ມແຂງໃຫ້ພະນັກງານຮຸ່ນສືບທອດ



(ສພຂ) - ວັນທີ 27 ມີນາຜ່ານມາທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ, ສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ ໄດ້ເປີດເວທີສົນທະນາພາວະຜູ້ນຳ ເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ພະນັກງານຮຸ່ນສືບທອດ, ການສ້າງຄອບຄົວມີຄວາມຜາສຸກ (ການເຮັດໜ້າທີ່ຂອງພະນັກງານ ແລະ ຈັດສັນເວລາໃຫ້ແກ່ຄອບຄົວ) ເນື່ອງໃນໂອກາດສະເຫຼີມສະຫຼອງວັນແມ່ນຍິງສາກົນ ຄົບຮອບ 115 ປີ; ນຳພາສົນທະນາໂດຍທ່ານ ນາງ ຂັນທອງ ພັນທະຈັກ ຄະນະພັກຮາກຖານສະພາປະຊາຊົນແຂວງ, ຜູ້ຊີ້ນຳວຽກງານອົງການຈັດຕັ້ງສະຫະພັນແມ່ຍິງ; ເຂົ້າຮ່ວມມີທ່ານ ປອ. ສຸວັນນີ ໄຊຊະນະຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ບັນດາທ່ານຄະປະຈຳສະພາປະຊາຊົນແຂວງ, ຄະນະ ແລະ ສະມາຊິກແມ່ຍິງຮາກຖານສະຫະພັນແມ່ຍິງ ສພຂ, ພະແນກການອ້ອມຂ້າງ ແລະ ພາກສ່ວນກ່ຽວຂ້ອງ.

ໃນເວທີສົນທະນາ, ໄດ້ຮັບຟັງການນຳສະເໜີຄວາມຮູ້ພື້ນຖານກ່ຽວກັບພາວະຜູ້ນຳຈາກທ່ານ ປອ. ສຸວັນນີ ໄຊຊະນະ ເຊິ່ງຍົກໃຫ້ເຫັນຫຼາຍເນື້ອໃນທີ່ມີຄວາມໝາຍຄວາມສຳຄັນ ແລະ ເປັນຄວາມຮູ້ອັນມີຄຸນຄ່າສາມາດນຳໄປໃຊ້ຢ່າງມີປະສິດທິພາບໃນການພັດທະນາອົງການຈັດຕັ້ງ ແລະພັດທະນາຕົນເອງເປັນຕົ້ນແມ່ນຄວາມຮູ້ກ່ຽວກັບພາວະຜູ້ນຳ, ຜູ້ນຳ ແລະ ສິດອຳນາດ, ອົງປະກອບລັກສະນະຂອງຄວາມເປັນຜູ້ນຳທີ່ມີສັກກະຍະພາບ, ຜູ້ນຳຂອງຫຼາຍປະເທດ ຕ່າງຍຸກຕ່າງສະໄໝ; ບົດຮຽນການສ້າງຄອບຄົວມີຄວາມຜາສຸກ (ການເຮັດໜ້າທີ່ຂອງພະນັກງານ ແລະການຈັດສັນເວ ລາໃຫ້ແກ່ຄອບຄົວ) ຈາກທ່ານ ນາງ ບຸນຊອນ ວໍລະສານ ອະດີດປະທານສະຫະພັນແມ່ຍິງແຂວງ ໂດຍຍົກໃຫ້ເຫັນເຖິງບົດຮຽນ ແລະ ປະສົບການຕົວຈິງໃນການພັດທະນາຕົນເອງ, ວິທີເຮັດໃຫ້ຄອບຄົວມີຄວາມຜາສຸກເປັນຕົ້ນແມ່ນການສ້າງຄວາມເປັນແບບຢ່າງພາຍໃນຄອບຄົວ, ການສ້າງຄວາມສາມັກຄີ ແລະ ການແບ່ງຄວາມຮັບຜິດຊອບເຊິ່ງກັນແລະກັນ, ການສ້າງຈິນຕະນາການໃຫ້ແກ່ລູກຫຼານແຕ່ຍັງນ້ອຍ, ການໃຫ້ໂອກາດໃນການພັດທະນາຕົນເອງພາຍໃນຄອບຄົວ.ພ້ອມນັ້ນ, ກໍເປີດໂອກາດໃຫ້ຜູ້ເຂົ້າຮ່ວມໄດ້ສົນທະນາແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນ ໂດຍສະເພາະແມ່ນເຕັກນິກວິທີທີ່ສ້າງໃຫ້ຄອບຄົວມີຄວາມສາມັກຄີ, ມີການພັດທະນາດີຂຶ້ນ, ການສ້າງຄວາມຮູ້ຄວາມສາມາດແກ່ລູກຫຼານ.

# ກອງປະຊຸມຮ່ວມລະຫວ່າງຄະນະເລຂາທິການສພຂ ກັບ ຫ້ອງວ່າການແຂວງຄຳມ່ວນ ປະຈຳປີ 2024




(ສພຂ) - ວັນທີ 27 ມີນາຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ດຳເນີນກອງປະຊຸມຮ່ວມ ລະຫວ່າງຄະນະເລຂາທິການສະພາປະຊາຊົນແຂວງກັບຫ້ອງວ່າການແຂວງປະຈຳປີ 2024 ໂດຍການເປັນປະທານຮ່ວມຂອງທ່ານ ສະເຫຼີມສັກ ແກ້ວຈັນທະລາ ເລຂາທິການສະພາປະຊາຊົນແຂວງແລະທ່ານສົມບູນ ແກ້ວວົງສາ ຫົວໜ້າຫ້ອງວ່າການແຂວງ ເຊິ່ງມີພະນັກງານທີ່ກ່ຽວຂ້ອງຂອງສອງພາກສ່ວນເຂົ້າຮ່ວມຢ່າງພ້ອມພຽງ; ທັງນີ້, ກໍເພື່ອສະຫຼຸບຕີລາຄາຄືນການຈັດຕັ້ງປະຕິບັດຂໍ້ຕົກລົງຮ່ວມລະຫວ່າງຄະນະເລຂາທິການ ສພຂ ກັບຫ້ອງວ່າການແຂວງ ໃນໄລຍະຜ່ານມາແລະວາງທິດທາງແຜນການໃນຕໍ່ໜ້າ ໃຫ້ໄດ້ຮັບຜົນດີຂຶ້ນເປັນກ້າວໆ ທັງຮັບປະກັນການປະຕິບັດຕາມພາລະບົດບາດ, ສິດແລະໜ້າທີ່ຂອງແຕ່ລະພາກສ່ວນ ມີຄວາມສອດຄ່ອງ ແລະ ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນນິຕິກຳໃຕ້ກົດໝາຍ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບການຈັດຕັ້ງປະຕິບັດຂໍ້ຕົກລົງຮ່ວມລະຫວ່າງຄະນະເລຂາທິການສະພາປະຊາຊົນແຂວງ ກັບ ຫ້ອງວ່າການແຂວງປະຈຳປີ2024ແລະທິດທາງແຜນການປະຈຳປີ 2025; ເຜີຍແຜ່ມະຕິວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງຄຳມ່ວນສະບັບເລກທີ 289/ຄປຈ.ຄມ, ລົງວັນທີ 4 ຕຸລາ 2023 ແລະ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວວຽກງານຂອງຫ້ອງວ່າການແຂວງຄຳມ່ວນ ສະບັບເລກທີ 1656/ຈຂ, ລົງວັນທີ 5 ຕຸລາ 2022; ພ້ອມກັນນີ້, ກໍໄດ້ຜ່ານຮ່າງບົດບັນທຶກກອງປະຊຸມຮ່ວມລະຫວ່າງຄະນະເລຂາທິການສະພາປະຊາຊົນແຂວງກັບຫ້ອງວ່າການແຂວງ. ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ພ້ອມກັນປຶກສາຫາລື, ແລກປ່ຽນຄຳເຫັນຄຳເຫັນຢ່າງກົງໄປກົງມາ ແລະ ມີຄວາມເປັນເອກະພາບສູງຕໍ່ບັນດາເນື້ອໃນບົດບັນທຶກຮ່ວມ ເພື່ອເປັນບ່ອນອີງໃຫ້ 2 ພາກສ່ວນ ນຳໄປຈັດຕັ້ງຜັນຂະຫຍາຍການປະຕິບັດແຜນວຽກປະຈຳປີ 2025 ໃຫ້ມີຜົນສຳເລັດ.

ກອງປະຊຸມເຫັນດີເປັນເອກະພາບມອບໃຫ້ຫ້ອງວ່າການແຂວງ ເປັນເຈົ້າພາບໃນການກະກຽມ ແລະ ດຳເນີນກອງປະຊຸມຮ່ວມລະຫວ່າງຄະນະເລຂາທິການສະພາປະຊາຊົນແຂວງກັບຫ້ອງວ່າການແຂວງ ປະຈຳປີ 2025 ແລະໄດ້ລົງລາຍເຊັນຢັ້ງຢືນຮ່ວມກັນ; ພາຍຫຼັງສຳເລັດກອງປະຊຸມ, ສອງພາກສ່ວນຍັງໄດ້ສ້າງກິດຈະກຳກິລາບານເຕະ ເພື່ອຊົມເຊີຍຜົນສຳເລັດກອງປະຊຸມຮ່ວມ, ສ້າງຂະບວນການຮັດແໜ້ນຄວາມສາມັກຄີຮັກແພງ ທັງເປັນສະເຫຼີມສະຫຼອງວັນສຳຄັນຂອງພັກແລະຂອງຊາດໃຫ້ເປັນຂະບວນຟົດຟື້ນ.

**(ເອື້ອ ມະໂນສິງ)**

# ຕິດຕາມກວດກາ ແລະ ຊຸກຍູ້ການປະຕິບັດໂຄງການ ຢູ່ 3 ເມືອງ



(ສພຂ)-ວັນທີ28-31 ມີນາຜ່ານມາ, ທ່ານ ນາງ ພູທອນ ແກ້ວພູວົງ ຮອງປະທານສະພາປະຊາຊົນແຂວງສະຫວັນນະເຂດ ພ້ອມດ້ວຍຄະນະທີ່ປະກອບດ້ວຍບັນດາທ່ານຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ຕາງໜ້າພະແນກກະສິກຳ ແລະ ປ່າໄມ້, ພະແນກໂຍທາທິການ ແລະ ຂົນສົ່ງ (ຍທຂ)ແລະພະນັກງານທີ່ກ່ຽວຂ້ອງ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດແລະແຜນການລົງທຶນຂອງລັດ ຕາມມະຕິສະພາປະຊາຊົນແຂວງຮັບຮອງເອົາໃນໄລຍະຜ່ານມາຢູ່ເມືອງສອງຄອນ, ເມືອງໄຊພູທອງ ແລະ ເມືອງຈຳພອນ ໂດຍມີບັນດາທ່ານເຈົ້າເມືອງ, ຮອງເຈົ້າເມືອງ, ຄະນະນຳ ແລະ ບັນດາຫົວໜ້າຫ້ອງການທີ່ກ່ຽວຂ້ອງຂອງເມືອງ ເຂົ້າຮ່ວມໃນການເຄື່ອນໄຫວ.

ຄະນະໄດ້ຮັບຟັງລາຍງານໂດຍສັງເຂບຈາກເລຂາພັກເມືອງແຕ່ລະເມືອງ ພ້ອມທັງລົງສຳຫຼວດພາກສະໜາມຕົວຈິງໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຢູ່ຂັ້ນເມືອງ ເຊິ່ງມີໂຄງການບຸກເບີກ-ສ້ອມແປງເສັ້ນທາງເລກທີ RR6690 ແຕ່ບ້ານສີງທ່າ-ບ້ານດອນມ່ວງ ເມືອງສອງຄອນລວງຍາວ16.6ກິໂລແມັດ ກວ້າງ 6 ແມັດ; ໂຄງການນີ້ ຈັດຕັ້ງປະຕິບັດໄດ້ໄລຍະໜຶ່ງແລ້ວ, ຄະນະກຳມະການຄຸ້ມຄອງໂຄງການຂັ້ນເມືອງ ໄດ້ລົງຕິດຕາມກວດກາພາກສະໜາມ 2 ຄັ້ງຄື: ຄັ້ງທີ 1 ກວດກາປົກກະຕິ, ຄັ້ງທີ2 ກວດກາຕາມການແຈ້ງເຊີນຂອງເຈົ້າຂອງໂຄງການ (ກວດ 100%) ພາຍຫຼັງກວດກາພົບວ່າ ຍັງປະຕິບັດບໍ່ໄດ້ຕາມການສະເໜີ ແລະ ຫຼາຍບັນຫາທີ່ບໍ່ສາມາດເຊັນຜ່ານໄດ້, ໃຫ້ບໍລິສັດຜູ້ຮັບເໝົາ ປັບປຸງ ແລະ ແກ້ໄຂຄືນໃໝ່. ຈາກນັ້ນ, ຄະນະໄດ້ຢ້ຽມຊົມຟາມລ້ຽງໄກ່ຢູ່ບ້ານມະໄລທອງ ເມືອງສອງຄອນ ອີກດ້ວຍ.

ຄະນະໄດ້ສືບຕໍ່ລົງສຳຫຼວດໂຄງການສົມທົບທຶນ50% ຂອງແຂວງ ກັບ ກະຊວງ ຍທຂ ກໍ່ສ້າງຂົວ 4 ແຫ່ງ ຕາມທາງຫຼວງແຫ່ງຊາດເລກທີ11Eແຕ່ເຮືອນຫີນ-ທ່າປະຊຸມ ເມືອງໄຊພູທອງມູນຄ່າລວມ61,735.99 ລ້ານກີບ; ໂຄງການກໍ່ສ້າງຂົວເບຕົງຫ້ວຍຊຽງບານ ລວງຍາວ 50 ແມັດ; ເສັ້ນທາງເລກທີ RR6303 ແຕ່ທາງແຍກທີ 13 ໃຕ້ (ບ້ານຫຼັກ 35)-ເທດສະບານເມືອງຈຳພອນ ເປັນໂຄງການສະເໜີໃໝ່ ປີ 2025 ງົບປະມານ 100% ຂອງໂຄງການປົກກະຕິ, ໄລຍະປະຕິບັດ 2025-2027 ໄລຍະການຊຳລະ2025-2029, ມູນຄ່າສະພາແຫ່ງຊາດຮັບຮອງ 28,913.22 ລ້ານກີບ, ແຜນການປີ 2025 ຈັດງົບປະມານໃສ່ 500 ລ້ານກີບ; ໂຄງການສ້ອມແປງຄັນຝາຍສຸຍ ເມືອງຈຳພອນ ເປັນ ໂຄງການສືບຕໍ່, ໄລຍະປະຕິບັດ 2024-2026 ໄລຍະການຊຳລະ 2024-2028, ມູນຄ່າສັນຍາຮັບເໝົາໂຄງການ 6,247.64 ລ້ານກີບ. ຄະນະຍັງໄປຢ້ຽມຊົມຟາມລ້ຽງໝູພັນເມືອງໄຊພູທອງ ແລະ ໂຮງງານປຸງແຕ່ງຜະລິດຕະພັນຢາ ພື້ນເມືອງບ້ານແກ້ງກອກທົ່ງ ເມືອງຈຳພອນ ອີກດ້ວຍ.

# ໂຄສະນາເຜີຍແຜ່ນິຕິກຳໃຕ້ກົດໝາຍຂົງເຂດ ສສກ ຢູ່ 4 ເມືອງຂອງແຂວງສະຫວັນນະເຂດ



(ສພຂ) - ວັນທີ 17-20 ມີນາຜ່ານມາ, ທ່ານ ຄຳດີ ສຸວັນນະສານ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ແລະ ບັນດາທ່ານສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ, ນະຄອນ ຮ່ວມກັບຄະນະພະແນກສຶກສາທິການ ແລະ ກິລາ (ສສກ) ແຂວງ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວໂຄສະນາເຜີຍແຜ່ນິຕິກຳໃຕ້ກົດໝາຍໃນຂົງເຂດວຽກງານການສຶກສາທິການ ແລະ ກິລາ ຢູ່ 5 ເມືອງ ຄື: ເມືອງນອງ, ເຊໂປນ, ວິລະບູລີ, ອາດສະພອນແລະນະຄອນໄກສອນ ພົມວິຫານ ເຊິ່ງມີທ່ານຮອງເຈົ້າເມືອງ, ຮອງເຈົ້ານະຄອນ ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ, ຫ້ອງການ ສສກ ເມືອງ, ຄະນະຮັບຜິດຊອບວຽກງານຄະນະພັດທະນາການສຶກສາຂັ້ນບ້ານ, ຄະນະພັດທະນາການສຶກສາຂັ້ນບ້ານ, ຄູ-ອາຈານ ຕະຫຼອດຮອດພໍ່ແມ່ປະຊາຊົນໃນແຕ່ລະຈຸດຂອງທັງ 5 ເມືອງ ເຂົ້າຮ່ວມຮັບຟັງທັງໝົດ 391 ຄົນ, 113 ຄົນ.

ການເຄື່ອນໄຫວຄັ້ງນີ້ ໄດ້ຮັບຟັງການລາຍງານໂດຍສັງເຂບຕໍ່ກັບການຈັດຕັ້ງປະຕິບັດວຽກງານສຶກສາທິການ ແລະ ກິລາ ຂອງເມືອງ, ນະຄອນ ໃນໄລຍະຜ່ານມາ ເຊິ່ງເຫັນວ່າໃນບາງເຂດ ຍັງສືບຕໍ່ມີບັນຫາການປະລະການຮຽນຂອງນັກຮຽນເປັນຈຳນວນຫຼາຍ; ຕິດພັນກັບການຈັດຕັ້ງປະຕິບັດ 16 ຄາດໝາຍຂອງຂະແໜງການ ສສກ ຍັງຫຼາຍຄາດໝາຍບໍ່ສາມາດບັນລຸໄດ້, ມີພຽງນະຄອນໄກສອນ ພົມວິຫານ ທີ່ສາມາດຈັດຕັ້ງປະຕິບັດບັນລຸໄດ້ທຸກຄາດໝາຍ. ນອກຈາກນັ້ນ, ຍັງມີບັນຫາປາກົດການຫຍໍ້ທໍ້ໃນໂຮງຮຽນ ເປັນຕົ້ນບັນຫາຢາ ສູບໄຟຟ້າ ແລະ ການດື່ມນ້ຳກະທ້ອມຍັງປາກົດໃນໝູ່ນັກຮຽນ ໂດຍສະເພາະນັກຮຽນຊັ້ນມັດທະຍົມ; ບັນຫາສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ສະພາບຄອບຄົວຂາດເຂີນ ສິ່ງຜົນໃຫ້ຜູ້ປົກຄອງຂາດການສົ່ງເສີມລູກຫຼານເຂົ້າຮຽນ, ກ້າວໄປສູ່ການປະລະການຮຽນແລະຕິດຕາມພໍ່ແມ່ໄປສ້າງເສດຖະກິດຄອບຄົວ.

ພາຍຫຼັງຮັບຟັງການລາຍງານແລ້ວ, ຜູ້ເຂົ້າຮ່ວມໄດ້ຮັບຟັງການເຜີຍແຜ່ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດແຫ່ງຊາດໄລຍະຜ່ານມາ ສະບັບເລກທີ 136/ສພຊ, ລົງວັນທີ 11 ທັນວາ 2024, ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດແຫ່ງຊາດໄລຍະຜ່ານມາ ສະບັບເລກທີ 24/ສພຂ.ສຂ, ລົງວັນທີ 25 ທັນວາ 2024 ແລະຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການມີສ່ວນຮ່ວມຂອງສັງຄົມຕໍ່ການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາທົ່ວແຂວງສະຫວັນນະເຂດ ສະບັບເລກທີ 535/ຈຂ, ລົງວັນທີ 01 ມີນາ 2024; ພາຍຫຼັງສິ້ນສຸດການນຳສະເໜີ ແລະ ເຜີຍແຜ່ແລ້ວ, ຍັງເປີດໂອກາດໃຫ້ຜູ້ເຂົ້າຮ່ວມໄດ້ມີການແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ.

ຕອນທ້າຍ, ທ່ານ ຄຳດີ ສຸວັນນະສານ ໄດ້ຮຽກຮ້ອງໃຫ້ແຕ່ລະພາກສ່ວນ ຈົ່ງພ້ອມກັນຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍໃນຂົງເຂດສຶກສາທິການ ແລະ ກິລາ ໃຫ້ໄດ້ຮັບປະສິດທິຜົນສູງຂຶ້ນ, ຄະນະຮັບຜິດຊອບວຽກງານຄະນະພັດທະນາການສຶກສາຂັ້ນບ້ານ ຕ້ອງໄດ້ເອົາໃຈໃສ່ບາງບັນຫາດັ່ງນີ້: ສຶກສາອົບຮົມທາງດ້ານການເມືອງ-ແນວຄິດ ໃຫ້ຄູ-ອາຈານ ມີຄຸນທາດການເມືອງໜັກແໜ້ນ, ມີຈັນຍາບັນ, ຈັນຍາທຳ, ມີຄວາມຮັກຊາດ, ມີຄວາມອົດທົນສູງ, ນຳພາ-ຊີ້ນຳອົງການຈັດຕັ້ງບ້ານໃນການພັດທະນາວຽກງານ ສສກ ຄຽງຄູ່ກັບການຜັນຂະຫຍາຍແນວທາງນະໂຍບາຍ ເພື່ອສ້າງເປັນແຜນພັດທະນາການສຶກສາຂັ້ນບ້ານ ພ້ອມທັງຈັດຕັ້ງປະຕິບັດໜ້າທີ່ອື່ນໆທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະພັດທະນາການສຶກສາຂັ້ນບ້ານ ສະບັບເລກທີ 5707/ສກຂ, ລົງວັນທີ 11 ຕຸລາ 2023; ຫັນເອົາມະຕິທີ່ກອງປະຊຸມສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງຮັບຮອງເປັນແຜນງານ, ໂຄງການຕິດພັນກັບຄະນະພັດທະນາການສຶກສາຂັ້ນບ້ານຕ້ອງໄດ້ສ້າງແຜນການພັດທະນາການສຶກສາຂັ້ນບ້ານ ໂດຍສຸມໃສ່ຄວາມຮຽກຮ້ອງຕ້ອງການຂອງໂຮງຮຽນບົນພື້ນຖານເງື່ອນໄຂແລະຄວາມອາດສາມາດຕົວຈິງຂອງທ້ອງຖິ່ນ ລວມເຖິງນິຕິກຳອື່ນໆທີ່ກ່ຽວຂ້ອງ, ຄົ້ນຄວ້າສ້າງແຜນການ, ແຜນງານກ່ຽວກັບວຽກງານຄະນະພັດທະນາການສຶກສາຂັ້ນບ້ານ; ພ້ອມທັງໃຫ້ມີການສະຫຼຸບລາຍງານການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ແກ່ທ່ານເຈົ້າເມືອງ ແລະ ພະແນກ ສສກ ແຂວງ ເພື່ອຮັບຊາບຢ່າງປົກກະຕິ.

ໂອກາດມາໂຄສະນາເຜີຍແຜ່ຄັ້ງນີ້, ຄະນະຍັງໄດ້ລົງຢ້ຽມຢາມບັນດາໂຮງຮຽນປະຖົມ, ມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍ ຂອງແຕ່ລະເມືອງ ພ້ອມທັງມອບອຸປະກອນການຮຽນຈຳນວນໜຶ່ງໃຫ້ແຕ່ລະຈຸດ ລວມມູນຄ່າ 7.8 ລ້ານກີບ.

# ເລືອກຕັ້ງຜູ້ແທນສົມບູນ-ສຳຮອງເຂົ້າຮ່ວມ ກອງປະຊຸມໃຫຍ່ອົງຄະນະພັກແຂວງສາລະວັນ




(ສພຂ) - ຕອນເຊົ້າວັນທີ 31 ມີນານີ້, ຄະນະພັກຮາກຖານສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ຈັດກອງປະຊຸມປ່ອນບັດເລືອກຕັ້ງຜູ້ແທນສົມບູນ, ສຳຮອງເຂົ້າຮ່ວມກອງປະຊຸມໃຫຍ່ອົງຄະນະພັກແຂວງສາລະວັນ ຄັ້ງທີ X ໂດຍການເປັນປະທານຂອງສະຫາຍ ນາງ ສູນໄຖ ໄຊຍະແສງ ກຳມະການພັກແຂວງ, ເລຂາຄະນະພັກຮາກຖານ, ຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີສະຫາຍ ສີເຮັງ ຫອມສົມບັດ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ສະຫາຍຮອງເລຂາຄະນະພັກຮາກຖານ, ບັນດາສະຫາຍຄະນະພັກຮາກຖານ, ຮອງເລຂາ 4 ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ພ້ອມດ້ວຍສະມາຊິກພັກສົມບູນ, ສຳຮອງແລະແຂກທີ່ຖືກເຊີນຈາກພາກສ່ວນກ່ຽວຂ້ອງ.

ກອງປະຊຸມໄດ້ຮັບຟັງບົດສະຫຼຸບປະຈຳປີ 2024 ແລະທິດທາງແຜນການປະຈຳປີ 2025 ຂອງຄະນະພັກຮາກຖານສະພາປະຊາຊົນແຂວງ; ເຜີຍແຜ່ຄຳສັ່ງວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ສະບັບເລກທີ 411/ຄລສພ, ລົງວັນທີ 8 ສິງຫາ 2023; ຄຳສັ່ງວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກສະບັບເລກທີ 03/ຄຈພຂ.ສວ, ລົງວັນທີ 17 ຕຸລາ 2023; ຄຳແນະນຳກ່ຽວກັບໂຄງປະກອບ-ບຸກຄະລາກອນ ແລະ ໄລຍະເວລາໃນການດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ທົ່ວແຂວງສາລະວັນ ສະບັບເລກທີ 04/ຄຈສຂ.ສວ, ລົງວັນທີ 29 ກຸມພາ 2024 ແລະມາດຕະຖານເງື່ອນໄຂຂອງຜູ້ແທນສົມບູນ, ສຳຮອງ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ຂອງອົງຄະນະພັກແຂວງສາລະວັນ. ຈາກນັ້ນ, ຜູ້ແທນສົມບູນ ໄດ້ໃຊ້ສິດປະຊາທິປະໄຕຂອງຕົນປ່ອນບັດເລືອກຕັ້ງຜູ້ແທນສົມບູນ, ສຳຮອງ ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ X ຂອງອົງຄະນະພັກແຂວງສາລະວັນ ເຊິ່ງຄະນະພັກຮາກຖານ ສພຂ ມີສະມາຊິກພັກ 45 ສະຫາຍ ຍິງ 22 ສະຫາຍ, ໃນນັ້ນ ສະມາຊິກພັກສຳຮອງ 5 ສະຫາຍ ຍິງ 1 ສະຫາຍ; ມີຜູ້ສະໝັກ 7 ສະຫາຍ ຍິງ 3 ສະຫາຍ, ເລືອກໄດ້ຜູ້ແທນສົມບູນ 4 ສະຫາຍ ເປັນຍິງ 1 ສະຫາຍ ແລະ ຜູ້ແທນສຳຮອງ 1 ສະຫາຍ (ຍິງ).

ສະຫາຍ ສີເຮັງ ຫອມສົມບັດ ຕາງໜ້າໃຫ້ຄະນະພັກຂັ້ນເທິງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານການເຄື່ອນໄຫວວຽກງານໃນໄລຍະຜ່ານມາຂອງຄະນະພັກຮາກຖານທັງເນັ້ນໜັກໃຫ້ບັນດາສະຫາຍສະມາຊິກພັກ ຈົ່ງພ້ອມກັນເອົາໃຈໃສ່ຮັກສາໄດ້ມູນເຊື້ອອັນດີງາມ, ຄວາມສາມັກຄີພາຍໃນຊ່ວຍເຫຼືອເຊິ່ງກັນແລະກັນ ພ້ອມກັນຈັດຕັ້ງປະຕິບັດໜ້າທີ່ວຽກງານຕາມ 3 ພາລະບົດບາດໃຫ້ສຳເລັດຕາມທີ່ຂັ້ນເທິງມອບໝາຍໃຫ້ ດ້ວຍຄວາມຮັບຜິດຊອບສູງ; ພ້ອມກັນນັ້ນ, ສະຫາຍຍັງຕີລາຄາສູງຕໍ່ການດຳເນີນກອງປະຊຸມຄັ້ງນີ້ ທີ່ສຳເລັດຕາມຂັ້ນຕອນ, ມີປະຊາທິປະໄຕ, ຍຸຕິທຳ, ໂປ່ງໃສ ສາມາດເລືອກໄດ້ຜູ້ທີ່ມີມາດຕະຖານ ແລະ ເງື່ອນໄຂ ເພື່ອເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ X ຂອງອົງຄະນະພັກແຂວງສາລະວັນເຊິ່ງຕ້ອງສຸມສະຕິປັນຍາ, ຄວາມສາມັກຄີເປັນຈິດໜຶ່ງໃຈດຽວກັນ ເພື່ອແບກຫາບພາລະໜ້າທີ່ອັນສູງສົ່ງ ແລະ ໜັກໜ່ວງ ທີ່ກອງປະຊຸມໃຫຍ່ຄັ້ງນີ້ມອບໝາຍໃຫ້.

**(ນາງ ຈັນທີ ດວງປັນຍາ)**



# ສາລະວັນ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 2



(ສພຂ) - ວັນສຸກທີ 28 ມີນາຜ່ານມາທີ່ສະໂມສອນໃຫຍ່ຂອງແຂວງສາລະວັນ ໄດ້ມີພິທີເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍການເປັນປະທານຂອງທ່ານ ສີເຮັງ ທອມສິມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງທີ 14; ມີບັນດາທ່ານສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການແລະອົງການຈັດຕັ້ງມະຫາຊົນຂອງແຂວງ, ເຈົ້າເມືອງ 8 ເມືອງ, ທະຫານ, ຕຳຫຼວດຕະຫຼອດຮອດພະນັກງານ-ລັດຖະກອນ ເຂົ້າຮ່ວມຮັບຟັງ 200 ກວ່າທ່ານ.

ໃນການເຜີຍແຜ່, ທ່ານ ສີເຮັງ ທອມສິມບັດ ໃຫ້ຮູ້ວ່າ: ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ດຳເນີນເປັນເວລາ 4 ວັນ ເລີ່ມແຕ່ວັນທີ 17-20 ມີນາ 2025 ໄດ້ຮັບຜົນສຳເລັດຢ່າງຈົບງາມ ເຊິ່ງໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍໄດ້ອອກເປັນມະຕິຂອງສະພາແຫ່ງຊາດຈຳນວນ 5 ສະບັບ ຄື: 1) ມະຕິວ່າດ້ວຍການຮັບຮອງເອົາການປັບປຸງລັດຖະທຳມະນູນ ສະບັບປີ2025, 2) ມະຕິວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບປັບປຸງປີ 2025, 3) ມະຕິວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບປັບປຸງປີ 2025, 4) ມະຕິວ່າດ້ວຍການຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງຂອງລັດຖະບານ ແລະ 5) ມະຕິວ່າດ້ວຍການຮັບຮອງເອົານະໂຍບາຍສົ່ງເສີມພິເສດສະເພາະໃຫ້ຜູ້ລົງທຶນໃນນິຄົມອຸດສາຫະກຳອຳມະຕະ. ຫຼັງຈາກນັ້ນ, ຜູ້ມີສິດເລືອກຕັ້ງ ໄດ້ສົນທະນາແລກປ່ຽນກ່ຽວກັບ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ເຊິ່ງບາງບັນຫາກໍໄດ້ຕອບຊີ້ແຈ້ງກັບທີ່.

ຕອນທ້າຍ, ທ່ານປະທານ ຄສຊປະຈຳເຂດເລືອກຕັ້ງທີ14 ຮຽກຮ້ອງໃຫ້ທຸກຂັ້ນພາຍໃນແຂວງ ຈົ່ງໄດ້ພ້ອມກັນຜັນຂະຫຍາຍເນື້ອໃນຂອງມະຕິກອງປະຊຸມສະໄໝວິສາມັນຄັ້ງນີ້ເຂົ້າໃນການປະຕິບັດວຽກງານຕົວຈິງຂອງແຕ່ລະພາກສ່ວນ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.



# ຮອງປະທານ ສພຂ ຈຳປາສັກ ຕິດຕາມກວດກາການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ຢູ່ 4 ເມືອງ



(ສພຂ) - ວັນທີ 25-28 ມີນາຜ່ານມາ, ທ່ານ ແກ້ວລັດຕະນະ ສີຫາວົງ ຄະນະປະຈຳພັກແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 15, ຮອງປະທານສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍທີ່ສພຂ ຈຳປາສັກ ໄດ້ຮັບຮອງເອົາໃນໄລຍະຜ່ານມາ ຢູ່ເມືອງບາຈຽງຈະເລີນສຸກ, ເມືອງປາກຊ່ອງ, ເມືອງປະທຸມພອນ ແລະ ເມືອງໂຂງ ໂດຍໄດ້ເປີດກອງປະຊຸມ ເພື່ອເຮັດວຽກຮ່ວມກັບຄະນະນຳຂອງເມືອງ ເຊິ່ງມີບັນດາທ່ານຫົວໜ້າຫ້ອງວ່າການເມືອງ, ຫ້ອງການຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ, ຫ້ອງການກະສິກຳ ແລະ ປ່າໄມ້, ຫ້ອງການພະລັງງານ ແລະ ບໍ່ແຮ່, ຫ້ອງການການເງິນຂອງ4ເມືອງເຂົ້າຮ່ວມ.

ໃນກອງປະຊຸມ ໄດ້ຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດນິຕິກຳທີ່ສະພາປະຊາຊົນແຂວງໄດ້ຮັບຮອງເອົາໃນໄລຍະຜ່ານມາ ເປັນຕົ້ນແມ່ນ ຂໍ້ຕົກລົງສະບັບເລກທີ 227/ຈຂ.ຈສ, ລົງວັນທີວັນທີ 21 ກຸມພາ2020ວ່າດ້ວຍການຮັບຮອງລາຄາຫົວໜ່ວຍທົດແທນຄ່າເສຍຫາຍຊັບສິນຂອງປະຊາຊົນທີ່ຖືກຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້າຫ້ວຍປາຫຼາຍ ເມືອງບາຈຽງຈະເລີນສຸກ ແລະ ເມືອງປາກຊ່ອງ; ຂໍ້ຕົກລົງສະບັບເລກທີ265/ຈຂ.ຈສ, ລົງວັນທີ 6 ມີນາ 2023 ວ່າດ້ວຍການຄຸ້ມຄອງການນຳໃຊ້ທີ່ດິນກະສິກຳຢູ່ເມືອງປາກຊ່ອງ; ຂໍ້ຕົກລົງສະບັບເລກທີ303/ຈຂ.ຈສ, ລົງວັນທີ 15 ມີນາ 2023 ວ່າດ້ວຍການປະເມີນມູນຄ່າທີ່ດິນທົ່ວແຂວງ(9ເມືອງ1ນະຄອນ); ຂໍ້ຕົກລົງສະ ບັບເລກທີ 708/ຈຂ.ຈສ, ລົງວັນທີ 30 ພຶດສະພາ 2019 ວ່າດ້ວຍການຄຸ້ມຄອງ ແລະ ພັດທະນາທີ່ດິນປ່າໄມ້ທົ່ວແຂວງ (9 ເມືອງ 1 ນະຄອນ)ເຊິ່ງເຫັນໄດ້ດ້ານດີ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້. ຈາກນັ້ນ, ໄດ້ພ້ອມກັນປະກອບຄຳຄິດຄຳເຫັນແລກປ່ຽນຢ່າງກົງໄປກົງມາ ພ້ອມທັງສະເໜີບາງບັນຫາຄວາມຫຍຸ້ງຍາກທີ່ເປັນສາເຫດເຮັດໃຫ້ການຈັດຕັ້ງປະຕິບັດບາງວຽກງານກໍຄືການຈັດຕັ້ງປະຕິບັດບັນດາມະຕິແລະນິຕິກຳໃຕ້ກົດໝາຍຍັງບໍ່ໄດ້ດີເທົ່າທີ່ຄວນ ເຊິ່ງອົງການປົກຄອງເມືອງຈະໄດ້ສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ.

ທ່ານ ແກ້ວລັດຕະນະ ສີຫາວົງ ໄດ້ສະແດງຄວາມຊົມເຊີຍຕໍ່ການລາຍງານຂອງເມືອງ ທີ່ສາມາດຍາດໄດ້ຜົນສຳເລັດ ແລະ ເນັ້ນໜັກໃຫ້ອົງການປົກຄອງເມືອງ ເອົາໃຈໃສ່ຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍແລະນິກຳໃຕ້ກົດໝາຍທີ່ສະພາປະຊາຊົນແຂວງຈຳປາສັກ ພິຈາລະນາຮັບຮອງ ໃຫ້ມີຜົນສຳເລັດ ແລະ ຮັບປະກັນປະສິດທິພາບ.

ເຄື່ອນໄຫວວຽກງານຄັ້ງນີ້ ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກມູນນິທິເອເຊຍ (TAF).

**(ໄຊຊະນະ ວັນນະພອນ ແລະ ພານຸກອນ ສົມບຸນຂັນ)**

# ຕິດຕາມກວດກາການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ



(ສພຂ) - ວັນທີ 25-28 ມີນາຜ່ານມາ, ທ່ານປອ. ສົມໄຊ ສີຫາຈັກ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ທີ່ສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ໄດ້ຮັບຮອງໃນໄລຍະຜ່ານມາ ຢູ່ 4 ເມືອງ ຄື: ໂພນທອງ, ມຸນລະປາໂມກ, ສຸຂຸມາ ແລະ ຈຳປາສັກ ໂດຍໄດ້ເປີດກອງປະຊຸມຮ່ວມກັບອົງການປົກຄອງ ເພື່ອຮັບຟັງການລາຍງານຈາກຕາງໜ້າຄະນະນຳ ແລະ ຂະແໜງການທີ່ກ່ຽວຂ້ອງທັງ 4 ເມືອງ ກ່ຽວກັບການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ສະພາແຫ່ງຊາດ ແລະ ສພຂ ຈຳປາສັກ ໄດ້ພິຈາລະນາຮັບຮອງເອົາໃນໄລຍະຜ່ານມາເຊິ່ງເຫັນໄດ້ດ້ານດີ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກແລະບົດຮຽນທີ່ຖອດຖອນໄດ້; ຈາກນັ້ນ, ໄດ້ມີການປະກອບຄຳຄິດຄຳເຫັນ, ແລກປ່ຽນຢ່າງກົງໄປກົງມາ ແລະ ສະເໜີບາງບັນຫາທີ່ມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານ, ສາເຫດທີ່ພາໃຫ້ການຈັດຕັ້ງປະຕິບັດຍັງບໍ່ໄດ້ດີເທົ່າທີ່ຄວນ ເຊິ່ງອົງການປົກຄອງເມືອງ ຈະໄດ້ສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ.

ທ່ານ ປອ. ສົມໄຊ ສີຫາຈັກ ໄດ້ສະແດງຄວາມຊົມເຊີຍທັງ 4 ເມືອງ ທີ່ສາມາດຍາດໄດ້ຜົນສຳເລັດຫຼາຍດ້ານ ທັງເນັ້ນໜັກຫຼາຍບັນຫາໃຫ້ອົງການປົກຄອງເມືອງເອົາໃຈໃສ່ຈັດຕັ້ງປະຕິບັດ ເປັນຕົ້ນຕ້ອງເຂັ້ມງວດໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິກຳໃຕ້ກົດໝາຍ.

**(ທັດລີໄຊ ໄຊມິນຕີ)**



# ຕິດຕາມກວດກາການຄຸ້ມຄອງແຮງງານຢູ່ເມືອງກະລຶມ



(ສພຂ) - ວັນທີ 24-27 ມີນາຜ່ານມາ, ທ່ານ ນາງ ໄຮມະນີ ວົງຫົ່ນແກ້ວ ຄະນະປະຈຳສະພາປະຊາຊົນແຂວງເຊກອງ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຄຸ້ມຄອງແຮງງານຢູ່ເມືອງກະລຶມເຊິ່ງໄດ້ຮັບຟັງການລາຍງານ ແລະ ສົນທະນາແລກປ່ຽນກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ແຮງງານ, ການສ້າງອາຊີບ, ການແກ້ໄຂການວ່າງງານແລະການປະຕິບັດນະໂຍບາຍຕ່າງໆ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະຫ້ອງການແຮງງານແລະສະຫວັດດີການ-ສັງຄົມ ແລະ ສະຫະພັນກຳມະບານເມືອງກະລຶມ; ພ້ອມນັ້ນ, ຍັງໄດ້ລົງຕິດຕາມສະພາບຕົວຈິງຢູ່ບໍລິສັດ ລາວກະລຶມ ບໍ່ແຮ່ຈຳກັດ, ບໍລິສັດດວງຈະເລີນ ແລະ ບໍລິສັດ ພະລັງງານໄຟຟ້າເຊກອງ ຈຳກັດ ໂດຍໄດ້ຮັບຟັງການລາຍງານກ່ຽວກັບການປະຕິບັດກົດໝາຍວ່າດ້ວຍແຮງງານ, ຂໍ້ສະດວກ ແລະ ຫຍຸ້ງຍາກໃນການຄຸ້ມຄອງແຮງງານ ລວມທັງການຈັດຕັ້ງປະຕິບັດລະຫວ່າງຜູ້ໃຊ້ແຮງງານ ກັບຜູ້ອອກແຮງງານ ເຊິ່ງເຫັນວ່າຂໍ້ມູນຕ່າງໆລະຫວ່າງຜູ້ໃຊ້ແຮງງານກັບຜູ້ອອກແຮງງານຂອງບາງບໍລິສັດແມ່ນຍັງບໍ່ທັນລະອຽດຊັດເຈນ, ຍັງບໍ່ທັນມີສັນຍາແຮງງານລະຫວ່າງຜູ້ໃຊ້ແຮງງານກັບຜູ້ອອກແຮງງານ, ຂາດການລົງໂຄສະນາ ເຜີຍແຜ່ປູກລະດົມໃຫ້ຜູ້ອອກແຮງງານເຂົ້າໃຈກ່ຽວກັບການປະກັນສັງຄົມ.

ໂອກາດນີ້, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໄດ້ຮຽກຮ້ອງບັນດາຫ້ອງການທີ່ກ່ຽວຂ້ອງ ເອົາໃຈໃສ່ຕິດຕາມກວດກາການເຂົ້າ-ອອກຂອງຄົນຕ່າງປະເທດທີ່ມາອອກແຮງງານ ໂດຍສະເພາະດ້ານ ເອກະສານຕ່າງໆ, ໃກ້ຊິດຕິດແທດກັບບໍລິສັດ ໂດຍການລົງໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍແຮງງານ, ປູກລະດົມຜູ້ອອກແຮງງານໃຫ້ເຂົ້າໃຈກ່ຽວກັບການເຂົ້າປະກັນສັງຄົມແລະສືບຕໍ່ຈັດຕັ້ງປະຕິບັດກອງທຶນໄພພິບັດເພື່ອບັນເທົາທຸກ ຜູ້ທີ່ປະສົບໄພຕ່າງໆ ຊ່ວຍເຫຼືອຜູ້ທີ່ດ້ອຍໂອກາດ; ສ່ວນບໍລິສັດແມ່ນໃຫ້ເອົາໃຈໃສ່ກວດກາແຮງງານ, ການຊົມໃຊ້ ແຮງງານ, ການສ້າງຕັ້ງ ແລະ ຂະຫຍາຍກອງທຶນ ໂດຍຄຳນຶງເຖິງສິດຜົນປະໂຫຍດອັນຊອບທຳຂອງຜູ້ອອກແຮງງານ ລວມທັງຄວາມປອດໄພຂອງແຮງງານ, ການປະຕິບັດນະໂຍບາຍຕ່າງໆ ຂອງບໍລິສັດ ແລະ ວຽກງານອື່ນໆ ໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍແຮງງານຢ່າງເຂັ້ມງວດ.

**(ນາງ ນາລີວັນ ແສງມະນີວົງ)**




# ຢ່າຢຸດພັດທະນາຕົນເອງ

**# ດົ້ນກົບເມກ**

ເວົ້າກັນວ່າຄົນສະຫຼາດມັກຈະເອົາປາກໄວ້ໃນໃຈແຕ່ຄົນໂງ່ມັກຈະເອົາໃຈໄວ້ທີ່ປາກເຊິ່ງໝາຍຄວາມວ່າ: ຢ່າເວົ້າທຸກຢ່າງທີ່ຄິດໄວ້ ແຕ່ຈົ່ງເລືອກເວົ້າແຕ່ສິ່ງທີ່ເກີດປະໂຫຍດ; ດັ່ງນັ້ນ, ໃນຊີວິດຈິງຄົນເຮົາຈຳເປັນຕ້ອງຄິດໃຫ້ຫຼາຍກວ່າເວົ້າ. ຜູ້ຂຽນສັງເກດເຫັນຜູ້ມັກເວົ້າອວດເວົ້າສະແດງໂຕເອງວ່າຮູ້ຫຼາຍຮູ້ເລິກ ຫຼື ອັນໃດກໍຮູ້ໝົດແລ້ວ, ຄົນຜູ້ນັ້ນຈຶ່ງຂາດເພື່ອນມິດທີ່ແທ້ຈິງ ເພາະມີແຕ່ເພື່ອນມິດທຽມ ເຊິ່ງກໍເທົ່າກັບຂາດຜູ້ແນະນຳຕັກເຕືອນຊີ້ທາງວ່າອັນໃດຖືກ-ຜິດ.

ຜູ້ຂຽນເຄີຍເຫັນຄົນຫຼົງໂຕເອງ ທີ່ຂາດເພື່ອນແທ້ຕັກເຕືອນຍ້ອນຫຼົງເຂົ້າໃຈຜິດວ່າ ໂຕເອງຮຽນສູງແລ້ວຮູ້ຈັກຄິດ ເລີຍທະນົງຕົນຈົນບໍ່ມີໃຜຢາກບອກສອນ; ກົງກັນຂ້າມກັບບາງຄົນທີ່ຖ່ອມຕົນ ເປີດໃຈ-ຍອມຮັບຟັງສຽງເວົ້າຂອງຄົນອ້ອມຂ້າງ ຍົກຕົວຢ່າງໃນເລື່ອງສາມກົກຄື: ໂຈໂສ ທີ່ເປີດໃຈຮັບຟັງທີ່ປຶກສາ ຈົນຮອດສັດຕູທີ່ເວົ້າອອກມາ ໂຈໂສ ກໍຍອມຮັບຟັງ ເພາະມັນເປັນປະໂຫຍດໃຫ້ຕັດສິນໃຈຖືກຕ້ອງ; ກົງກັນຂ້າມກັບຕົວລະຄອນຊື່ວ່າອ້ວນສ້ຽວທີ່ໃຈແຄບຫຼົງໂຕເອງບໍ່ຢາກຮັບຟັງຄົນອື່ນ ແລະ ບໍ່ຍອມຊອກຄົນເກັ່ງມາເປັນທີ່ປຶກສາຍ້ອນວ່າອ້ວນສ້ຽວ ຫຼົງເຂົ້າໃຈຜິດສຳຄັນໂຕເອງວ່າເກັ່ງແລ້ວ, ຄິດຖືກ ເລີຍບໍ່ຢາກຟັງໃຜໃຫ້ຄຳແນະນຳ, ອ້ວນສ້ຽວ ບໍ່ເຄີຍຄິດວ່າໂຕເອງອາດຄິດຜິດກໍເປັນໄປໄດ້ ນີ້ກໍແມ່ນການປະໝາດຢ່າງໜຶ່ງ. ດັ່ງນັ້ນ, ຫາຍະນະພິນາດວອດວາຍຈຶ່ງຕາມມາຢ່າງຫຼີກລ່ຽງບໍ່ໄດ້.

ສັງລວມໄດ້ວ່າ: ຄົນສະຫຼາດຈະຍອມຮັບຟັງຄວາມເຫັນແຕກຕ່າງ-ຟັງຮອດຜູ້ຢູ່ຝັ່ງກົງກັນຂ້າມ ເພື່ອເອົາຂໍ້ມູນມາຕັດສິນໃຈໃຫ້ຖືກຕ້ອງ, ນັ້ນຄືການບໍ່ຢຸດພັດທະນາຕົນ.




# ວິທີເຮັດວຽກ

**ພາກທີ 7**
**ບັນຫາພະນັກງານ**

**ຂ) ຊ່າງໃຊ້ພະນັກງານ:** ເວລາໃຊ້ພະນັກງານ, ມີຫຼາຍຄົນມັກຕິດພະຍາດລຸ່ມນີ້:

1. ມັກແຕ່ໃຊ້ຄົນຜູ້ເປັນພີ່ນ້ອງເພື່ອນຝູງທີ່ຮັກແພງລື້ງເຄີຍກັນ, ຖືວ່າເຂົາເຈົ້າເຊື່ອໃຈໄດ້ຄັກແນ່ກວ່າຄົນນອກ.

2. ມັກໃຊ້ແຕ່ຄົນຖະແຫຼງຈອບອອຍ, ປະຈົບປະແຈງແລ້ວໄປກຽດຊັງຜູ້ທີ່ສັດຊື່ຈິງໃຈທີ່ບໍ່ຊ່າງຖະແຫຼງ.

3. ມັກໃຊ້ແຕ່ຄົນທີ່ມີຈິດໃຈຖືກຕາມສິ່ງຕົນມັກແລ້ວໄປຫຼີກເວັ້ນບໍ່ໃຊ້ຄົນທີ່ມີແນວຄິດຈິດໃຈບໍ່ຄືຂອງຕົນ, ແມ່ນຈະດີພຽງໃດກໍ່ຕາມ, ຍ້ອນພະຍາດເຫຼົ່ານັ້ນເມື່ອເຫັນຄົນທີ່ຕົນຊອບຫາກເຮັດຜິດໂຕເອງກໍ່ແກ້ເອົາ ແລະ ປົກປ້ອງເອົາ, ເຮັດໃຫ້ເຂົານັບມື້ນັບຊົ່ວນັບເສຍໄປຊັກໃຊ້, ບາດພວກຄົນທີ່ສັດຊື່ຈິງໃຈນັ້ນຊ້ຳພັດໄປຊອກຫາເລື່ອງໃສ່ເຂົາເຈົ້າເພື່ອແກ້ແຄ້ນ. ເປັນແນວນັ້ນມັກກໍເປັນທຳມະດາທີ່ວຽກການຂອງພັກຈະຕ້ອງເສຍ ແລະ ເສຍເຖິງຊື່ສຽງຂອງຜູ້ນຳອີກດ້ວຍ. ເຮັດແນວໃດຈຶ່ງແມ່ນໃຊ້ພະນັກງານຖືກ?.

ຕົວເຮົາຕ້ອງມີນ້ຳໃຈ້ກວ້າງຂວາງ ຈຶ່ງຈະປະພຶດຕໍ່ພະນັກງານຕາມວິທີເສຍສະຫຼະປະໂຫຍດສ່ວນຕົວ ເພື່ອສ່ວນລວມບໍ່ມີຂໍ້ບາດໝາງຕໍ່ຜູ້ໃດເຮັດໃຫ້ພະນັກງານບໍ່ຖືກຫຼົງລືມ, ຕ້ອງມີຈິດໃຈກວ້າງຂວາງ ຈຶ່ງຈະໄປໃກ້ຊິດພວກເຄີນທີ່ຕົນເອງບໍ່ຊອບນັ້ນໄດ້.

ອ່ານຕໍ່ສະບັບໜ້າ...




# ຄະນະຜູ້ແທນ...

(ຕໍ່ຈາກໜ້າ 1)

ຖະສະພາກັບການພັດທະນາສັງຄົມ ແລະ ຄວາມຍຸຕິທຳ". ພ້ອມດຽວກັນນີ້, ຍັງມີກອງປະຊຸມກຳມາທິການປະຈຳຕ່າງໆຂອງIPU ເຊັ່ນ: ກອງປະຊຸມຄະນະບໍລິຫານງານ IPU, ກອງປະຊຸມກຳມາທິການກ່ຽວກັບສັນຕິພາບ-ຄວາມໝັ້ນຄົງສາກົນ, ກອງປະຊຸມກຳມາທິການກ່ຽວກັບການພັດທະນາແບບຍືນຍົງ, ກອງປະຊຸມກຳມາທິການກ່ຽວກັບປະຊາທິປະໄຕ-ສິດທິມະນຸດ, ກອງປະຊຸມກຳມາທິການກ່ຽວກັບວຽກງານອົງການສະຫະປະຊາຊາດ, ເວທີປຶກສາຫາລືຂອງສະມາຊິກລັດຖະສະພາເພດຍິງ ແລະ ເວທີປຶກສາຫາລືຂອງສະມາຊິກລັດຖະສະພາໜຸ່ມຂອງ IPU; ນອກຈາກນີ້, ຍັງມີກອງປະຊຸມປີ່ນອ້ອມຕ່າງໆເປັນຕົ້ນ: ກອງປະຊຸມກຸ່ມລັດຖະສະພາ ASEAN+3, ກອງປະຊຸມກຸ່ມລັດຖະສະພາອາຊີ-ປາຊີຟິກ, ກອງປະຊຸມຂອງເຄືອຂ່າຍລັດຖະສະພາຂອງບັນດາປະເທດບໍ່ຮ່ວມກຸ່ມ ແລະ ກອງປະຊຸມພົບປະລະຫວ່າງຄະນະຜູ້ແທນສະມາຊິກສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ.

ໃນກອງປະຊຸມໃຫຍ່, ບັນດາປະທານສະພາ, ຮອງປະທານສະພາແລະຫົວໜ້າຄະນະຜູ້ແທນລັດຖະສະພາຈາກປະເທດຕ່າງໆໄດ້ຜັດປ່ຽນກັນຂຶ້ນກ່າວປາໄສ ໂດຍສ່ວນໃຫຍ່ແມ່ນຍົກໃຫ້ເຫັນບັນຫາ ແລະ ສະພາບການທາງການເມືອງຂອງພາກພື້ນ ແລະ ສາກົນ, ແລກປ່ຽນປະສົບການໃນການປະຕິບັດໜ້າທີ່ຂອງລັດຖະສະພາ ກ່ຽວກັບວຽກງານພັດທະນາສັງຄົມ ແລະ ຄວາມຍຸຕິທຳຂອງແຕ່ລະປະເທດ. ທ່ານ ສັນຍາ ປຣະເສີດ ຫົວໜ້າຄະນະຜູ້ແທນລາວ ກໍໄດ້ກ່າວປາໄສ ໂດຍຍົກໃຫ້ເຫັນເຖິງສະພາບການຂອງໂລກໃນປັດຈຸບັນ ທີ່ເປັນໄພຂົ່ມຂູ່ຢ່າງໜັກໜ່ວງຕໍ່ການຮັກສາສັນຕິພາບ ແລະ ການຢູ່ຮ່ວມກັນຢ່າງສັນຕິຂອງມວນມະນຸດ ພ້ອມທັງຢືນຢັນທັດສະນະຂອງ ສປປລາວ ໃນການຮ່ວມມືກັບບັນດາປະເທດໃນພາກພື້ນ ແລະ ທົ່ວໂລກ ເພື່ອແກ້ໄຂ ແລະ ຮັບມືກັບສິ່ງທ້າທາຍຕ່າງໆ ເປັນຕົ້ນບັນຫາສົງຄາມການຄ້າ, ໄພພິບັດທຳມະຊາດ, ການປ່ຽນແປງຂອງດິນຟ້າອາກາດ, ອາຊະຍາກຳຂ້າມຊາດ ແລະ ອື່ນໆ ເພື່ອປະກອບສ່ວນເຂົ້າໃນການປົກປ້ອງສັນຕິພາບ, ສະຖຽນລະພາບແລະການຮ່ວມມືເພື່ອການພັດທະນາ; ພ້ອມດຽວກັນນີ້, ທ່ານຍັງໄດ້ແຈ້ງໃຫ້ທີ່ປະຊຸມຊາບກ່ຽວກັບການປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວແລະກົດໝາຍທີ່ກ່ຽວຂ້ອງຈຳນວນໜຶ່ງເພື່ອໃຫ້ແທດເໝາະກັບສະພາບການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ການເຊື່ອມໂຍງກັບສາກົນ ໃນໄລຍະໃໝ່, ພ້ອມທັງຮຽກຮ້ອງໃຫ້ລັດຖະສະພາສະມາຊິກ IPU ຈົ່ງເພີ່ມທະວີບົດບາດຂອງຕົນໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ, ຊຸກຍູ້ການພັດທະນາ ແລະ ສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນໃນທຸກຂົງເຂດວຽກງານ.

ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ເຂົ້າຮ່ວມ ແລະ ປະກອບຄຳເຫັນໃນກອງປະຊຸມປີ່ນອ້ອມຕ່າງໆ ຕາມທີ່ກ່າວມາຂ້າງເທິງ ແລະພົບປະໂອ້ລົມກັບຄະນະຜູ້ແທນເພື່ອນມິດຍຸດທະສາດ (ຫວຽດນາມ, ສປຈີນ, ສປປເກົາຫຼີ ແລະ ລັດເຊຍ) ແລະ ເພື່ອນມິດສາກົນ ພ້ອມທັງໃຫ້ສຳພາດຕໍ່ສື່ມວນຊົນຂອງອຸດສະເບກິດສະຖານ, ເບລາຣຸດຊີ ແລະ ລັດເຊຍ ຫຼາຍຄັ້ງ ເພື່ອສະແດງຄວາມຮູ້ສຶກ ແລະ ທັດສະນະຕໍ່ກອງປະຊຸມໃຫຍ່ IPU ກໍຄືສະພາບການຮ່ວມມືສອງຝ່າຍລະຫວ່າງອົງການນິຕິບັນຍັດອີກດ້ວຍ.

**(ກົມພົວພັນລັດຖະສະພາຫຼາຍຝ່າຍ)**



## ສຸກສະບາຍຫາຍໂຣຄາ

ພະນັກງານທີ່ເຮັດວຽກໃນຫ້ອງການຫລາຍທ່ານບໍ່ສາມາດປະຕິເສດໄດ້ວ່າຕ້ອງເຮັດວຽກໜັກ ແລະ ເປັນປະຈຳຕະຫຼອດປີ ເຊິ່ງບາງຄັ້ງພຶດຕິກຳທີ່ເຮັດໃນຫ້ອງການໄດ້ສົ່ງຜົນກະທົບບໍ່ດີຫຼາຍຢ່າງຕໍ່ສຸຂະພາບ; ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້, ເຮົາໄດ້ລວມເອົາ 6 ພຶດຕິກຳ ທີ່ຖືວ່າເປັນໄພງຽບຂົ່ມຂູ່ພະນັກງານຫ້ອງການ ອັນເປັນສາເຫດໃຫ້ເກີດພະຍາດຕ່າງໆ ມາໃຫ້ຮູ້ຈັກແລະສຶກສານຳກັນເຊິ່ງມີດັ່ງຕໍ່ໄປນີ້:

# ພຶດຕະກຳ 6 ຂໍ້ ພາຍໃນຫ້ອງການທີ່ເປັນໄພງຽບ

# ຮຽບຮຽງໂດຍ: ດອກໄມ້ປ່າ



**1. ນອນເດິກ:** ຕ້ອງເຮັດວຽກໜັກເປັນປົກກະຕິ ແລະ ຕ້ອງຕື່ນເຊົ້າເພື່ອໄປເຮັດວຽກໃຫ້ທັນເວລາ ແຕ່ການນອນເດິກກາຍເປັນພຶດຕິກຳທີ່ເຮັດເປັນປະຈຳ ເຊິ່ງຈະພາໃຫ້ພັກຜ່ອນບໍ່ພຽງພໍ ເຮັດໃຫ້ສະມາທິສັ້ນ ແລະ ຍັງເຮັດໃຫ້ລະບົບຕ່າງໆໃນຮ່າງກາຍເຮັດວຽກໄດ້ບໍ່ເຕັມທີ່.

**2. ກິນອາຫານບໍ່ຖືກເວລາ:** ການກິນອາຫານບໍ່ຖືກເວລາ, ກິນອາຫານຢ່າງຮີບດ່ວນ ແລະ ກິນບໍ່ພຽງພໍ ຫຼື ອາດຈະເກີນຄວາມຕ້ອງການຂອງຮ່າງກາຍເປັນອີກໜຶ່ງພຶດຕິກຳທີ່ພະນັກງານຫ້ອງການມັກຈະເຮັດຈຶ່ງເຮັດໃຫ້ກະເພາະເຮັດວຽກໄດ້ບໍ່ປົກກະຕິ.

**3. ຕິດຈໍມືຖື:** ຢູ່ໜ້າຈໍຄອມພິວເຕີ ຫຼື ຈໍມືຖືຫຼາຍເກີນໄປ ມັນເປັນໄພຂົ່ມຂູ່ທີ່ງຽບ ທີ່ພາໃຫ້ເກີດການເຈັບຫົວຫຼືເຮັດໃຫ້ຕາວຸ້ນເສື່ອມສະພາບ ແລະ ຍັງສາມາດສົ່ງຜົນໃຫ້ນິ້ວມືລັອກນຳອີກ.

**4. ພາຍຖົງໜັກ:** ພຶດຕິກຳນີ້ສາມາດເຮັດໃຫ້ເກີດການປວດບ່າ, ເຈັບຄໍ ແລະ ສາມາດລາມໄປສູ່ການເຈັບຫົວ ແລະ ເຈັບຫຼັງ ເຊິ່ງເປັນສາເຫດຂອງການຍຸບ ແລະ ການເສື່ອມຂອງກະດູກສັນຫລັງ ຈົນເກີດເປັນຄວາມສ່ຽງທີ່ເຮັດໃຫ້ກະດູກທັບເສັ້ນປະສາດ ລວມທັງເຮັດໃຫ້ເກີດອາການແຂນຂາມຶນຊາ ແລະ ອ່ອນເພຍ.

**5. ນັ່ງຜິດທ່າ:** ອາດຈະເປັນຍ້ອນນິດໄສ ຫຼື ຍ້ອນຮູ້ສຶກສະດວກສະບາຍກັບທ່ານັ່ງທີ່ບໍ່ຖືກຕ້ອງ ແຕ່ຖ້ານັ່ງຜິດທ່າເປັນເວລາດົນໆ ຈະເຮັດໃຫ້ເກີດອາການປວດບ່າ, ຫຼັງ ແລະ ຍັງເຮັດໃຫ້ເກີດຄວາມເມື່ອຍລ້າໃນການເຮັດວຽກໂດຍບໍ່ຮູ້ໂຕ ຖືເປັນພຶດຕິກຳທີ່ເຮັດໃຫ້ເກີດຄວາມທຸກທໍລະມານຫຼາຍໃນຊີວິດ.

**6. ກິນຈຸບຈິບໝົດມື້:** ຫຼາຍທ່ານເລືອກທີ່ຈະແກ້ຄວາມຢາກນອນໂດຍການກິນອາຫານຈຸບຈິບ ຫຼື ບາງຄົນກໍກິນໜ້ອຍໜຶ່ງ ແລະ ກິນແບບນັ້ນຢູ່ໝົດມື້ ເຊິ່ງພຶດຕິກຳນີ້ຖືວ່າເປັນການເພີ່ມນ້ຳໜັກໃຫ້ກັບຮ່າງກາຍໂດຍບໍ່ຮູ້ຕົວ ເນື່ອງຈາກເກີດການສະສົມຂອງໄຂມັນ.

ສຳລັບທ່ານໃດທີ່ຮູ້ຈັກວ່າຕົນມີພຶດຕິກຳຕ່າງໆ ທີ່ຖືກຈັດເປັນໄພຂົ່ມຂູ່ງຽບທີ່ມີຜົນກະທົບທາງລົບຕໍ່ຮ່າງກາຍແລ້ວຢ່າລືມຮັກຕົນເອງໃຫ້ຫລາຍ ໂດຍເລີ່ມຈາກການປັບປ່ຽນພຶດຕິກຳທັງ 6 ຢ່າງນີ້ກ່ອນ, ຈາກນັ້ນຄ່ອຍໆຫັນມາກິນອາຫານທີ່ດີຕໍ່ສຸຂະພາບ ແລະ ໃຫ້ເວລາຕົນເອງເພື່ອອອກກຳລັງກາຍ ເຊື່ອແນ່ວ່າຈະຊ່ວຍໃຫ້ສຸຂະພາບດີຂຶ້ນຢ່າງແນ່ນອນ.

www.sanook.com




# ໝົກປາແດກແລກຊ້າງ

# ດາວເປັ່ງແສງ

❈ ສຸພາສິດເພິ່ນເວົ້າ
ຫາກພິຈານຈິງຄັກ
ສັບສຳນວນຊິມໃຊ້
ໝົກປາແດກແຮກຊ້າງ

ສຳນວນເກົ່າຍັງຈຳ ຢູ່ເນີ!
ຄຶດທົບທວນເຫັນແຈ້ງ
ຄະຕິເຕືອນໄດ້ຕະຫຼອດ
ບໍ່ຄອງຄຸ້ຍຕ່ອນແກງ ແທ້ແລ້ວ!

❈ ປຽບຄົນຈົນຊອບຊື້
ຫາໄດ້ມາກໍເທໝົດ
ຫວັງວ່າຄຶງຈັກມື້
ວ່າຊິເປັນບາດແຄ່ນແຂ້ນ

ມັກຊ່ຽງໂຊກຊາຕາ
ວັດດວງເລີງເລື້ອຍ
ດວງດີຖືກນຳເພິ່ນ
ຝັນຫວານໄວ້ຮອດບໍ່ສຸຍ

❈ ມື້ເຊົ້າມາຫາເຂ່ຍຄຸ້ຍ
ຫຸ້ມເທໄປຫຼາຍແສນ
ຊາຄວາມຝັນສັ່ງມາຄື້ວ
ຫຸ້ມເທໃສ່ຜັດຈ້ອຍ

ປາແດກຕ່ອນໃນໄຫ ອີກແລ້ວ!
ວ່າຊິເອົາເປັນຕົ້
ບາດຍາມເຮົາບໍ່ໃຈໃສ່
ຄອງຄອຍຄວ້າຖືກແຕ່ລົມ

❈ ວ່າຊິເຊົາບໍ່ຊື້
ບອກບັນຫາເຂົາຂາຍ
ຊອກຫາເງິນເອົາມາແກ້
ແມ່ນປ່ອງນີ້ແນ່ແທ້

ໃກ້ຊິອອກຜັດມາຝັນ ອີກແລ້ວ!
ຖືກຕາມຝັນແທ້
ກູ້ເອົາຄືນງວດກ່ອນ
ສອງຄືນຊ້ອນຕັ້ງວ່າຝັນ

❈ ອອກວັນຈັນກະບໍ່ໃກ້
ງວດສອງສາມກະເລີຍເຊົາ
ເປັນນຳຄົນເຮົາສ້າງ
ຜູ້ເຂົາຂາຍຍັງບໍ່ຮູ້

ວັນພຸດກະຕິດຕາມ
ຜັດວ່າຫຼອຍອອກນຳກົ້ນ
ນອນຫຼາຍຈຶ່ງຝັນລ່າຍ
ເຮົາຄົນສ່ອງຊື້ບໍ່ເຫັນ ດອກນາ!

❈ ຄົນມີເພິ່ນຫຼິ້ນຫຸ້ນ
ມີແຕ່ລວຍກັບລວຍ
ຜ່ອງນຳເອົາໄປຄ້າ
ຄົນຈົນມັກຫຼິ້ນໄພ້

ຫຼືຕີກອກຕີກ໊ອບ ພຸ້ນແລ້ວ
ເກືອບບໍ່ມີທີ່ເກັບໄວ້
ຜົນກຳໄລກ້ອນບັກໃຫຍ່
ແທງຫວຍພ້ອມຢາກຊິລວຍ ຖືກແລ້ວ!

❈ ບຸກບືນຊອກໃຊ້
ມື້ລະສິບຊາວພັນ
ໄດ້ມາຫຼາຍກິນໜ້ອຍ
ຜູ້ບາງຄົນໄດ້ນ້ອຍ

ອອກເຫື່ອເທແຮງ
ແຕ່ບໍ່ຈັກປະຢັດໄວ້
ຍັງພໍແຄນໄຄແນ່
ຍາມໃຊ້ຊ້ຳຜັດຫຼາຍ

❈ ມັນກັບກັນ ກັບເພິ່ນເວົ້າ
ທິດສະດີອະທິບາຍ
ນັກວິຊາການໃຫ້
ຫາໄວ້ຫຼາຍໃຊ້ໜ້ອຍ

ຢາກມີມັ່ງໃຫ້ປະຢັດ
ສາດຕະສິນເຂົາຄົ້ນ
ໃນຫຼັກເສດຖະສາດ
ແນວນັ້ນຈຶ່ງຊິມີ ແທ້ແລ້ວ!



## ຟັກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສຽມທ້ຽນ

❈ **ປີ**ໃໝ່ລາວລາເລີກແລ້ວຈົບຈາກຈອບໄປ ບາງຄົນຍັງອາໄລເທດສະການອັນນັ້ນ ຍາມນັ່ງນອນຍັງຝັນເພີ້ ລະເມີບ່າຄວາມເກົ່າ **ຄິດຮອດຄາວເມື່ອຄັ້ງ** ສະຫຼອງຫຼິ້ນມ່ວນມັນ ບາງຄົນນັ້ນຍັງຝັນວ່າ**ລັບໄລ** ບາງຄົນຍັງອາໄລ **ອະດີດຫວານແສນຊຶ້ງ** ບາງຜ່ອງຊີງລິງເສົ້າ ຜິດຫວັງຫຼັງປີໃໝ່ ເປັນແນວໃດກະຊ່າງທ່ອນ ຂໍໃຫ້ພົ້ນຜ່ານໄປສາເນີ ປີໃໝ່ໃຈຕັ້ງ ກະທ່ານແຕ່ຄວາມດີ ຫາກຊິມີຄົນເຫັນ ຄ່າຄຸນຄວາມດີສ້າງ ທຸກເສັ້ນທາງເດີນກ້າວ ເອົາຄວາມດີຄຽງຄູ່ ບຸນຊິບ່າສົ່ງຍູ້ ສົມຫວັງໄດ້ດັ່ງມະໂນ **ດອກນາ!**

❈ **ກົມ**ອຸຕຸນິຍົມ ແລະ ອຸທົກກະສາດ ໄດ້ອອກແຈ້ງການເຕືອນພະຍາກອນອາກາດໃນອາທິດນີ້ ວ່າ: ອາກາດຈະສືບຕໍ່**ຮ້ອນອົບເອົ້າ** ແລະ ອາດຈະມີຝົນໝາກເຫັບ ພ້ອມທັງຟ້າເຫຼື້ອມລົມພັດແຮງເປັນບາງໂອກາດ ອາກາດຮ້ອນເຮັ່ງຮ້າຍ ສຸລິຈີເຜົາຜານ ວາໂຍເທາະເທີບພັດ ຕ່ອຍຕີຕ່າຕ້ອງ ອາຄານເຮືອນທ່າທ້ອງ ເພພັງທະລາຍມຸ່ນ ດຸດັ່ງອົງເທບໄທ້ ພະອິນໂກທາຮ້າຍໂກດເຄືອງ **ໜ່າຍເດ!**

## ຊວນຍິ້ມ

# ແອ່ນຕຸ້ງ

## ເລື່ອງ: ຂ້ອຍບໍ່ເຫັນ

ເກີດເຫດການປຸ້ນຊັບຢູ່ທະນາຄານແຫ່ງໜຶ່ງ; ຫຼັງຈາກປຸ້ນຊັບສຳເລັດ, ໂຈນກໍຄິດຊິຂ້າປິດປາກຜູ້ທີ່ເຫັນເຫດການ ຈຶ່ງເອົາປືນໄປຈໍ້ແລ້ວຖາມຊາຍຜູ້ທຳອິດວ່າ:

**ໂຈນ:** ຕອນກີ້ ມຶງເຫັນບໍ່ ກູເຮັດຫຍັງແດ່?

**ຊາຍຜູ້ທຳອິດຕອບແບບຕະກຸກຕະກັກ:** ເຫັນໆ... ຂ້ອຍເຫັນ

ພໍແຕ່ສິ້ນສຽງຕອບ ໂຈນກໍຍິງປືນປັ້ງ!!! ຊາຍຄົນນັ້ນຕາຍທັນທີ

ໂຈນຈຶ່ງຫັນປາຍປືນໄປຫາຊາຍຄົນທີສອງ ພ້ອມຖາມຄຳຖາມດຽວກັນ

**ຊາຍຄົນທີສອງຕອບ:** "ບໍ່ໆ ຂ້ອຍບໍ່ເຫັນຫຍັງ ແຕ່ເມຍຂ້ອຍເຫັນ"

!!!!!!!!!!



## ຄະຕິເຕືອນໃຈ

# ດອກຫຍ້າ

ເຊື່ອຄວາມສົ້ມ ເສຍເກືອຫຼາຍທໍ່
ເຊື່ອຄວາມສັບສົ່ນ ເສຍຄົນຮັກແພງ

ລັດຖະສະພາຕ່າງປະເທດ

# ຮົງກົງ ຜ່ານກົດໝາຍ ຄວາມປອດໄພທາງອິນເຕີເນັດ




(HKFP) - ວັນພຸດທີ 19 ມີນາຜ່ານມາ, ຮົງກົງ ໄດ້ຜ່ານຮ່າງກົດໝາຍສະບັບໃໝ່ ເຊິ່ງເຈົ້າໜ້າທີ່ລັດຖະບານກ່າວວ່າ ຈະຊ່ວຍເພີ່ມທະວີການປົກປ້ອງລະບົບ "ພື້ນຖານໂຄງລ່າງສຳຄັນ" ຈາກການໂຈມຕີທາງອິນເຕີເນັດ, ໂດຍການບັງຄັບໃຊ້ຂໍ້ກຳນົດດ້ານຄວາມປອດໄພກັບອົງການໃນຂະແໜງການຕ່າງໆ ຕັ້ງແຕ່ທະນາຄານ ໄປຈົນເຖິງການຂົນສົ່ງທາງອາກາດ.

ຜູ້ປະກອບການດ້ານພື້ນຖານໂຄງລ່າງ ອາດຖືກປັບໃໝສູງເຖິງ 5 ລ້ານໂດລາຮົງກົງ (ປະມານ 643,420 ໂດລາສະຫະລັດ) ຖ້າລະເມີດພັນທະທາງກົດໝາຍໃນການດຳເນີນການກວດສອບຄວາມປອດໄພ, ແຜນການສຸກເສີນແລະລາຍງານການໂຈມຕີລະບົບຄອມພິວເຕີທີ່ສຳຄັນ.

ຂະນະທີ່ລັດຖະມົນຕີຮັກສາຄວາມປອດໄພຮົງກົງ ຄຣິສ ຖັງ (Chris Tang) ກ່າວຕື່ມວ່າ ກົດໝາຍສະບັບນີ້ຈະມີຜົນບັງຄັບໃຊ້ໃນຕົ້ນປີໜ້າ ແລະລັດຖະບານ ຈະສ້າງຕັ້ງສຳນັກງານໃໝ່ ໂດຍສະເພາະອີກດ້ວຍ.

ກົດໝາຍດັ່ງກ່າວ ກວມເອົາຜູ້ປະກອບການພື້ນຖານໂຄງລ່າງສຳຄັນໃນຫຼາຍຂະແໜງການ ລວມມີ: ພະລັງງານ, ເຕັກໂນໂລຊີຂໍ້ມູນຂ່າວສານ, ການທະນາຄານ ແລະ ການບໍລິການທາງການເງິນ, ການຂົນສົ່ງທາງບົກ ທາງອາກາດ ແລະ ທາງທະເລ, ການສື່ສານ ແລະ ການອອກອາກາດ (ການກະຈາຍພາບ-ສຽງ), ການບໍລິການດ້ານສຸຂະພາບ.

ລັດຖະບານຮົງກົງກ່າວຕື່ມວ່າ ກົດໝາຍສະບັບໃໝ່ ແມ່ນສອດຄ່ອງກັບການປົກປ້ອງທີ່ຄ້າຍຄືກັນຢູ່ອາເມລິກາ, ອັງກິດ, ອົດສະຕຣາລີ ແລະ ສະຫະພາບເອີຣົບ ແຕ່ເຈົ້າໜ້າທີ່ຈະບໍ່ເປີດເຜີຍຊື່ຂອງຜູ້ປະກອບການດ້ານພື້ນຖານໂຄງລ່າງ ເພື່ອຫຼີກເວັ້ນການກາຍເປັນເປົ້າໝາຍຂອງການໂຈມຕີ.

# ປະທານາທິບໍດີເປຣູ ປະກາດຈັດການ ເລືອກຕັ້ງທົ່ວໄປເດືອນເມສາ 2026



(Xinhua) - ວັນອັງຄານທີ 25 ມີນາຜ່ານມາ, ປະທານາທິບໍດີດີນາ ໂບລູອາຣ໌ເຕ (Dina Boluarte) ແຫ່ງສາທາລະນະລັດເປຣູປະກາດຈັດການເລືອກຕັ້ງທົ່ວໄປຢ່າງເປັນທາງການໃນເດືອນເມສາ 2026 ໂດຍຫວັງວ່າຈະຢຸດຕິໄລຍະເວລາແຫ່ງຄວາມບໍ່ໝັ້ນຄົງທີ່ມີປະທານາທິບໍດີ 6 ຄົນ ໃນຮອບ 8 ປີ.

"ມື້ນີ້, ປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍ, ສະແດງໃຫ້ເຫັນຫຼັກໝັ້ນອັນໜັກແໜ້ນຂອງພວກເຮົາຕໍ່ປະຊາທິປະໄຕ... ຂ້າພະເຈົ້າ ຂໍປະກາດຈັດການເລືອກຕັ້ງທົ່ວໄປໃນວັນທີ 12 ເມສາ 2026," ໂບລູອາຣ໌ເຕ ກ່າວໃນຄຳປາໄສທົ່ວປະເທດ; ນາງກ່າວວ່າ: ຊາວເປຣູຈະສາມາດເລືອກຕັ້ງປະທານາທິບໍດີຄົນຕໍ່ໄປ, ສະມາຊິກສະພາຕໍ່າ ແລະ ສະມາຊິກສະພາສູງ ຂອງລັດຖະສະພາທີ່ມີສອງສະພາ (bicameral - ສະພາຄູ່) ໃນອະນາຄົດ, ແລະ ຜູ້ແທນລັດຖະສະພາແອນດຽນ ໄດ້ຢ່າງ "ເສລີ ແລະ ປະຊາທິປະໄຕ".

ໂບລູອາຣ໌ເຕກ່າວວ່າລັດຖະບານຂອງນາງໃຫ້ຄຳໝັ້ນສັນຍາຈະຮັກສາຄວາມເປັນກາງແລະຄວາມທ່ຽງທຳຢ່າງແທ້ຈິງ ເພື່ອໃຫ້ຜົນການເລືອກຕັ້ງ "ບໍ່ມີຂໍ້ສົງໄສ ແລະ ສະທ້ອນໃຫ້ເຫັນເຖິງຄວາມຕັ້ງໃຈຂອງປະຊາຊົນທີ່ສະແດງອອກຢ່າງເຕັມທີ່." ນາງມີຄວາມໝັ້ນໃຈວ່າການເລືອກຕັ້ງຈະສິ້ນສຸດຍຸກແຫ່ງຄວາມຂາດສະຖຽນລະພາບທີ່ໄດ້ເຫັນປະທານາທິບໍດີຫົກຄົນໃນ 8 ປີທີ່ຜ່ານມາ "ເຊິ່ງໄດ້ສ້າງຄວາມແຕກແຍກທີ່ເຮັດໃຫ້ພວກເຮົາແຕກແຍກກັນ, ສິ່ງຜົນໃຫ້ການລົງທຶນຊັກຊ້າ ແລະ ອັດຕາການກໍ່ອາຊະຍາກຳເພີ່ມສູງຂຶ້ນ."

ຊາວເປຣູຕ້ອງການໃຫ້ການໂຄສະນາຫາສຽງເລືອກຕັ້ງສຸມໃສ່ຂໍ້ສະເໜີທີ່ຮັບປະກັນການເຕີບໂຕ, ຄວາມຍຸຕິທຳທາງສັງຄົມ ແລະ ການພັດທະນາ ລວມທັງຄວາມຕໍ່ເນື່ອງຂອງໂຄງການສາທາລະນູປະໂພກ ເພື່ອໃຫ້ປະເທດສືບຕໍ່ພັດທະນາ ແລະ ສ້າງວຽກເຮັດງານທຳ; ນາງກ່າວແລະເສີມວ່າ: ເປຣູ ຈະຈັດການເລືອກຕັ້ງທົ່ວໄປທ່າມກາງການຟື້ນຕົວທາງດ້ານເສດຖະກິດ ໂດຍຄາດວ່າຈະເຕີບໂຕ 4% ໃນປີນີ້ ແລະ 5% ໃນປີ 2026.

ໂບລູອາຣ໌ເຕ ເປັນປະທານາທິບໍດີໃນເດືອນທັນວາ 2022 ຫຼັງຈາກສະພານິຕິບັນຍັດຂັບໄລ່ເປໂດຣ ກາສຕີໂຢ (Pedro Castillo)(2021-2022)ອອກຈາກຕຳແໜ່ງ ເນື່ອງຈາກພະຍາຍາມຍຸບສະພາທີ່ກຳລັງຈະຖອດຖອນເຂົາອອກຈາກຕຳແໜ່ງ.

(ລັດຖະສະພາ Andean ແມ່ນອົງການບໍລິຫານແລະປຶກສາຫາລືຂອງປະຊາຄົມແອນດຽນ ທີ່ປະກອບດ້ວຍຕົວແທນຈາກ 4 ລັດສະມາຊິກ ໄດ້ແກ່: ໂບລີວີ, ໂກໂລມບີ, ເອກວາດໍແລະເປຣູ, ແລະ 1 ສະມາຊິກສົມທົບຄື ຊິເລ; ລັດຖະສະພາ ປະກອບດ້ວຍສະມາຊິກ 25 ຄົນ, ໂດຍ 5 ຄົນເປັນຕົວແທນໃຫ້ແຕ່ລະລັດ)

# ກອງປະຊຸມຄັ້ງປະຖົມມະລຶກ ສະພາແຫ່ງຊາດ Mozambique ຊຸດທີ X



(Xinhua) - ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດໂມຊຳບິກຊຸດທີ X ໄດ້ໄຂຂຶ້ນເມື່ອວັນພຸດທີ 26 ມີນາ ແລະ ຈະດຳເນີນໄປຮອດວັນທີ 13 ພຶດສະພານີ້, ບັນດາສະມາຊິກສະພາແຫ່ງຊາດ (ສສຊ) ຈະກວດກາຄືນ 26 ຫົວຂໍ້ສຳຄັນທີ່ກ່ຽວຂ້ອງເຖິງຍຸດທະສາດການພັດທະນາແຫ່ງຊາດແລະງົບປະມານການເງິນ; ຫົວຂໍ້ຕົ້ນຕໍໃນວາລະກອງປະຊຸມ ລວມມີແຜນການ 5 ປີ (2025-2029) ຂອງລັດຖະບານ ແລະ ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ປີ 2025.

ກອງປະຊຸມຍັງຈະພິຈາລະນາຍຸດທະສາດການພັດທະນາແຫ່ງຊາດ ປີ 2025-2044, ບົດລາຍງານປະຈຳປີຂອງອົງການໄອຍະການສູງສຸດ ແລະ ບັນຊີການເງິນແຫ່ງລັດປະຈຳປີ 2023; ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ການປັບປຸງບັນດາກົດໝາຍອົງການຈັດຕັ້ງສະພາແຫ່ງຊາດແລະລະບຽບການຕ່າງໆ ກໍເປັນຫົວຂໍ້ໃນການປຶກສາຫາລືເຊັ່ນກັນ.

ໃນຄຳປາໄສເປີດກອງປະຊຸມ, ນາງ ມາຣ໌ກາຣິດາ ທາລາປາ (Margarida Talapa) ປະທານສະພາແຫ່ງຊາດ ໄດ້ເນັ້ນໜັກເຖິງຄວາມຊັບຊ້ອນຂອງຂະບວນການເລືອກຕັ້ງໃນປະເທດ ແລະເນັ້ນໜັກເຖິງຄວາມຈຳເປັນຂອງກົດໝາຍເລືອກຕັ້ງທີ່ຕອບສະໜອງຕໍ່ການປະນີປະນອມທາງການເມືອງທີ່ "ສ້າງຄວາມອົດທົນ ແລະ ເຄົາລົບເຊິ່ງກັນແລະກັນ ເພື່ອການເຈລະຈາລະດັບຊາດ".

ວັນທີ 27-28 ມີນາ, ບັນດາ ສສຊ ໄດ້ເຂົ້າຮ່ວມກອງປະຊຸມປະຖົມນິເທດແລະການປັບຕົວເພື່ອສ້າງຄວາມຄຸ້ນເຄີຍກັບຂັ້ນຕອນທາງກົດໝາຍແລະກົດລະບຽບຂອງສະພາແຫ່ງຊາດ.

ນອກຈາກນັ້ນ, ສະພາແຫ່ງຊາດ ຍັງຈະອະພິປາຍ ແລະ ລົງຄະແນນສຽງກ່ຽວກັບບັນຫາຕ່າງໆ ເຊັ່ນ: ການເລືອກຕັ້ງສະມາຊິກສະພາປ້ອງກັນປະເທດ ແລະ ຄວາມໝັ້ນຄົງແຫ່ງຊາດ, ຮັບຮອງເອົາການແຕ່ງຕັ້ງປະທານສານປົກຄອງ ແລະ ຮອງປະທານສານສູງສຸດ, ການແຕ່ງຕັ້ງທີ່ປຶກສາຜູ້ພິພາກສາຂອງສະພາລັດຖະທຳມະນູນ, ການອະນຸມັດແຜນການ ແລະ ງົບປະມານຂອງສະພາແຫ່ງຊາດ ປີ 2025.

# ສະພາແຫ່ງຊາດອາກເມນີ ຕົກລົງ ໃຫ້ເລີ່ມຂະບວນການເຂົ້າຮ່ວມ EU



(Xinhua) - ວັນພຸດທີ 26 ມີນາຜ່ານມາ, ສະພາແຫ່ງຊາດອາກເມນີ ໄດ້ຜ່ານຮ່າງກົດໝາຍຄັ້ງທີສອງ ແລະ ຄັ້ງສຸດທ້າຍ ເພື່ອເລີ່ມຕົ້ນຂະບວນການເຂົ້າເປັນສະມາຊິກຂອງສະຫະພາບເອີຣົບ (EU) ຢ່າງເປັນທາງການ, ຮ່າງກົດໝາຍທີ່ມີຊື່ວ່າ "ການລິເລີ່ມຂະບວນການເຂົ້າເປັນສະມາຊິກຂອງສາທາລະນະລັດອາກເມນີ ໃນສະຫະພາບເອີຣົບ" ໄດ້ຮັບການອະນຸມັດດ້ວຍຄະແນນເຫັນດີ 64 ສຽງ ແລະ ບໍ່ເຫັນດີ 7 ສຽງ (ສະພາແຫ່ງຊາດອາກເມນີ ມີ 107 ທີ່ນັ່ງ).

ຮ່າງກົດໝາຍລະບຸວ່າ, ອາກເມນີ "ມຸ່ງໝັ້ນໃນການພັດທະນາສະຖາບັນປະຊາທິປະໄຕ, ຍົກລະດັບສະຫວັດດີການສັງຄົມ, ເພີ່ມທະວີຄວາມໝັ້ນຄົງແຫ່ງຊາດ ແລະ ຢຶດໝັ້ນໃນຫຼັກນິຕິທຳ; ສະນັ້ນ, ຈຶ່ງໄດ້ປະກາດເລີ່ມຂະບວນການເຂົ້າຮ່ວມສະຫະພາບເອີຣົບ."

ຮ່າງກົດໝາຍດັ່ງກ່າວ ມາຈາກໂຄງການລິເລີ່ມຂອງພົນລະເມືອງທີ່ເອີ້ນວ່າ "Eurovote" ເຊິ່ງມີຜູ້ລົງນາມ 60 ພັນຄົນ ເກີນເກນທີ່ກຳນົດໄວ້ 50 ພັນຄົນ; ລັດຖະບານອາກເມນີ ໄດ້ຮັບຮອງຂໍ້ສະເໜີດັ່ງກ່າວເມື່ອວັນທີ 9 ມັງກອນ 2025 ແລະ ບັນດາສະມາຊິກສະພາແຫ່ງຊາດ ໄດ້ອະນຸມັດຂໍ້ສະເໜີດັ່ງກ່າວຄັ້ງທຳອິດໃນວັນທີ 12 ກຸມພານີ້.

ວັນສຸກທີ 4 ເມສາຜ່ານມາ, ປະທານາທິບໍດີ ວາຮັກ ຄາຊາຕູຢານ (Vahagn Khachaturyan) ໄດ້ລົງນາມໃນກົດໝາຍເພື່ອປະກາດໃຊ້ຢ່າງເປັນທາງການ.

# Richard Rasi ໄດ້ຮັບເລືອກເປັນ ປະທານສະພາແຫ່ງຊາດສະໂລວາກີ




(Xinhua) - ວັນພຸດທີ 26 ມີນາຜ່ານມາ, ຣິຊາດ ຣາຊີ ຮອງປະທານພັກ Hlas ຫຼື ສຽງ-ສັງຄົມປະຊາທິປະໄຕ (Voice - Social Democracy) ໄດ້ຮັບເລືອກຕັ້ງເປັນປະທານສະພາແຫ່ງຊາດສະໂລວາກີ; ຣາຊີ ໄດ້ຮັບຄະແນນທັງໝົດ 79 ສຽງ ຈາກສະມາຊິກສະພາແຫ່ງຊາດທີ່ເຂົ້າຮ່ວມປະຊຸມ ເຊິ່ງເກີນເກນ 76 ສຽງທີ່ຕ້ອງການໃນສະພາແຫ່ງຊາດທີ່ມີ 150 ທີ່ນັ່ງ. ຕຳແໜ່ງດັ່ງກ່າວ ໄດ້ວ່າງຕັ້ງແຕ່ເດືອນເມສາ 2024 ເມື່ອ ປີເຕີ ເປວເລກຣິນີ (Peter Pellegrini) ເຊິ່ງດຳລົງຕຳແໜ່ງປະທານໃນຂະນະນັ້ນ ໄດ້ຮັບໄຊຊະນະໃນການເລືອກຕັ້ງປະທານາທິບໍດີ.

ນາຍົກລັດຖະມົນຕີ ໂຣເບີດ ຟີໂກ (Robert Fico) ກ່າວເຖິງການເລືອກຕັ້ງຣາຊີວ່າເປັນຈຸດສູງສຸດຂອງຂະບວນການທີ່ຍາກລຳບາກເພື່ອຮັກສາສະຖຽນລະພາບໃຫ້ກັບລັດຖະບານປະສົມ.

ການລົງຄະແນນສຽງຖືກເລື່ອນອອກໄປເປັນເວລາຫຼາຍເດືອນ ເນື່ອງຈາກຄວາມຂັດແຍ້ງພາຍໃນລັດຖະບານປະສົມສາມພັກ ກ່ຽວກັບຜູ້ສະໝັກຮັບເລືອກຕັ້ງທີ່ເປັນເອກະພາບ; ໃນລະຫວ່າງການຮັກສາການ, ປີເຕີ ຊີກາ (Peter Ziga) ຮອງປະທານສະພາແຫ່ງຊາດ ເປັນຜູ້ບໍລິຫານວຽກງານຂອງສະພາແຫ່ງຊາດ.

ກ່ອນໜ້ານີ້, ຣາຊີ ເຄີຍດຳລົງຕຳແໜ່ງລັດຖະມົນຕີກະຊວງການລົງທຶນ, ການພັດທະນາພາກພື້ນ ແລະ ຂໍ້ມູນຂ່າວສານ ໃນລັດຖະບານຂອງ ຟີໂກ.

# ການາດາ ຈະຈັດການເລືອກຕັ້ງໃໝ່ ທ່າມກາງ "ໄພເຂົ່າຂູ່" ຈາກທຣຳ



(AFP) - ຊາວການາດາ ກຽມອອກໄປໃຊ້ສິດເລືອກຕັ້ງຄັ້ງໃໝ່ໃນວັນທີ 28 ເມສານີ້ ທ່າມກາງຄວາມເຄັ່ງຕຶງກັບສະຫະລັດ.

ວັນຈັນທີ 24 ມີນາຜ່ານມາ, ມາກຄານີ (Mark Carney) ນາຍົກລັດຖະມົນຕີການາດາ ໄດ້ເຂົ້າພົບນາງ ແມຣີ ໄຊມອນ (Mary Simon) ຜູ້ວ່າການລັດການາດາ ເພື່ອຂໍໃຫ້ລົງນາມໃນລັດຖະດຳລັດເພື່ອຍຸບສະພາສາມັນ ຫຼື ສະພາຕ່ຳ (House of Commons) ແລະ ຈັດການເລືອກຕັ້ງທົ່ວໄປກ່ອນກຳນົດໃນວັນທີ 28 ເມສານີ້.

ຄານີ ໄດ້ຮຽກຮ້ອງໃຫ້ຊາວການາດາ ມີຄວາມສາມັກຄີ ແລະປອງດອງເພື່ອຢືນຂຶ້ນແລະປະເຊີນໜ້າກັບລັດຖະບານສະຫະລັດຂອງປະທານາທິບໍດີ ໂດນັນ ທຣຳ ທີ່ກຳລັງຂົ່ມຂູ່ ແລະ ຕ້ອງການທຳລາຍການາດາແລະທຸກພາກສ່ວນໃນການາດາ ຈະບໍ່ອະນຸຍາດໃຫ້ສິ່ງນີ້ເກີດຂຶ້ນ; ຜູ້ນຳການາດາ ອາຍຸ 60 ປີ ຮຽກຮ້ອງໃຫ້ປະຊາຊົນຕອບໂຕ້ໄພຂົ່ມຂູ່ຈາກສະຫະລັດທັງດ້ານການຄ້າແລະອຳນາດອະທິປະໄຕໂດຍການສ້າງເສດຖະກິດໃຫ້ເຂັ້ມແຂງ ແລະ ການມີບ້ານເມືອງທີ່ປອດໄພກວ່າ ພ້ອມທັງຢືນຢັນວ່າ ຈະບໍ່ມີການພົບປະຫຼືປຶກສາຫາລືກັບ ທຣຳ ບໍ່ວ່າໃນທາງໃດກໍຕາມ ຈົນກວ່າຜູ້ນຳສະຫະລັດຈະຍອມຮັບອະທິປະໄຕຂອງການາດາ, ຫຼັງຈາກທຣຳຍັງໃຊ້ຄຳເວົ້າ "ລັດທີ 51".

ຕະຫຼອດໄລຍະຜ່ານມາ ບັນຫາການເມືອງ, ເສດຖະກິດ ແລະ ສັງຄົມພາຍໃນປະເທດ ແມ່ນປັດໄຈສຳຄັນໃນການຕັດສິນໃຈຂອງຜູ້ມີສິດເລືອກຕັ້ງຊາວການາດາ; ແນວໃດກໍຕາມ, ສຳລັບການເລືອກຕັ້ງຄັ້ງນີ້ ມີຄຳຖາມໃຫຍ່ຢູ່ໃນໃຈຂອງຊາວການາດາຫຼາຍຄົນວ່າ: "ໃຜຈະຮັບມືທຣຳໄດ້ດີກວ່າ?".

# ນາຍົກລັດຖະມົນຕີອົດສະຕຣາລີ ປະກາດ ຈັດການເລືອກຕັ້ງທົ່ວໄປໃນວັນທີ 3 ພຶດສະພາ



(AFP) - ແອນໂທນີ ອັລບາເນຊີ (Anthony Albanese) ນາຍົກລັດຖະມົນຕີຂອງອົດສະຕຣາລີ ກ່າວເມື່ອວັນສຸກທີ 28 ມີນາຜ່ານມາວ່າ ອົດສະຕຣາລີ ຈະຈັດການເລືອກຕັ້ງທົ່ວໄປໃນວັນທີ 3 ພຶດສະພານີ້ ເຊິ່ງການໂຄສະນາຫາສຽງເລືອກຕັ້ງຈະເປັນການປະຊັນວິໄສທັດກ່ຽວກັບການດຳເນີນການດ້ານດິນຟ້າອາກາດ, ພະລັງງານນິວເຄລຍ ແລະ ຕະຫຼາດທີ່ຢູ່ອາໄສທີ່ລາຄາສູງ.

ພັກແຮງງານຝ່າຍກາງຊ້າຍຂອງ ອັລບາເນຊີ ເຂົ້າບໍລິຫານໃນເດືອນພຶດສະພາ 2022 ໂດຍຂັບໄລ່ລັດຖະບານອະນຸລັກນິຍົມ ທີ່ບໍ່ເປັນທີ່ນິຍົມ ຫຼັງຈາກປົກຄອງປະເທດເກືອບ 1 ທົດສະວັດ; ແຕ່ຄວາມກະຕືລືລົ້ນໃນເບື້ອງຕົ້ນສຳລັບ ອັລບາເນຊີ ອາຍຸ 62 ປີ ໄດ້ຈາງຫາຍໄປໃນສອງສາມເດືອນທີ່ຜ່ານມາ, ໃນຂະນະທີ່ລັດຖະບານໃກ້ຈະສິ້ນສຸດອາຍຸການສາມປີຂອງຕົນ. ຜົນສຳຫຼວດຄວາມຄິດເຫັນສະແດງໃຫ້ເຫັນວ່າອັລບາເນຊີມີຄະແນນສູສີກັບ ປີເຕີ ດັດຕັນ (Peter Dutton) ຜູ້ນຳຝ່າຍຄ້ານສາຍອະນຸລັກນິຍົມ ອາຍຸ 54 ປີ ຜູ້ມີແນວຄິດຂວາຈັດເຊິ່ງເປັນອະດີດນັກສືບປາບປາມຢາເສບຕິດທີ່ຕ້ອງການຫຼຸດຈຳນວນຄົນເຂົ້າເມືອງ ແລະຍົກເລີກການຫ້າມໃຊ້ພະລັງງານນິວເຄລຍ.

ອົດສະຕຣາລີ ເຊິ່ງເປັນມະຫາອຳນາດດ້ານການຂຸດຄົ້ນຖ່ານຫີນຈະຕ້ອງເລືອກລະຫວ່າງຜູ້ສະໝັກສອງຄົນທີ່ມີຄວາມຄິດເຫັນທີ່ແຕກຕ່າງກັນຢ່າງຈະແຈ້ງກ່ຽວກັບການປ່ຽນແປງຂອງດິນຟ້າອາກາດ ແລະ ຫຼຸດຜ່ອນການປ່ອຍອາຍພິດ. ລັດຖະບານຂອງ ອັລບາເນຊີສະໜັບສະໜູນການຊຸກຍູ້ທົ່ວໂລກຫຼຸດຜ່ອນການປ່ອຍອາຍພິດກາກບອນ ໂດຍເຕືອນເຖິງອະນາຄົດທີ່ແຮ່ເຫຼັກ ແລະ ການສົ່ງອອກຖ່ານຫີນທີ່ກໍ່ໃຫ້ເກີດມົນລະພິດ ຈະບໍ່ຄ້ຳຢັນເສດຖະກິດອີກຕໍ່ໄປ; ນະໂຍບາຍຕົ້ນຕໍຂອງ ດັດຕັນ ແມ່ນແຜນການສ້າງເຕົາປະຕິກອນນິວເຄລຍຂະໜາດອຸດສາຫະກຳ 7 ແຫ່ງ ມູນຄ່າ 200 ຕື້ໂດລາສະຫະລັດ ເຊິ່ງບໍ່ຈຳເປັນຕ້ອງເລັ່ງໃຊ້ພະລັງງານທົດແທນ, ເຂົາໃຫ້ຄຳໝັ້ນສັນຍາທີ່ຈະຫຼຸດຈຳນວນຄົນເຂົ້າເມືອງລົງ 25% ແລະ ວາງມາດຕະການທີ່ເຂັ້ມງວດສຳລັບນັກສຶກສາຕ່າງປະເທດທີ່ໄດ້ຮັບອະນຸຍາດໃຫ້ເຂົ້າຮຽນໃນອົດສະຕຣາລີ.

ຜົນສຳຫຼວດຄວາມຄິດເຫັນສະແດງໃຫ້ເຫັນວ່າ ຄວາມກັງວົນດ້ານເສດຖະກິດ ເຊັ່ນຄ່າໃຊ້ຈ່າຍທີ່ຢູ່ອາໄສທີ່ສູງ ຈະມີອິດທິພົນໃນການແຂ່ງຂັນ.

ເຖິງວ່າອັດຕາເງິນເຟີ້ຈະຫຼຸດລົງພາຍໃຕ້ການບໍລິຫານຂອງ ອັລບາເນຊີ, ຈາກ 7.8% ໃນປີ 2022 ເປັນ 2.4% ໃນເດືອນທັນວາປີຜ່ານມາ; ແຕ່ຫຼາຍຄົວເຮືອນຍັງປະສົບກັບບັນຫາລາຄາອາຫານ, ນ້ຳມັນເຊື້ອໄຟ ແລະ ຄ່າໄຟຟ້າທີ່ສູງ.

ທັງສອງຝ່າຍໃຫ້ຄຳໝັ້ນສັນຍາຈະແກ້ໄຂຕະຫຼາດທີ່ຢູ່ອາໄສທີ່ລາຄາສູງເກີນໄປ; ເມືອງໃຫຍ່ໆເຊັ່ນ ຊິດນີ ແລະ ເມວເບິນ ຖືກຈັດຢູ່ໃນ 10 ອັນດັບຕະຫຼາດທີ່ຢູ່ອາໄສລາຄາແພງທີ່ສຸດໃນໂລກ.

ອັລບາເນຊີໃຊ້ຊີວິດໄວຜູ້ໃຫຍ່ສ່ວນໃຫຍ່ໃນວົງການການເມືອງ ໂດຍຂຶ້ນສູ່ລະດັບສູງຂອງພັກແຮງງານຕັ້ງແຕ່ຍັງຢູ່ໃນຊຸມຊົນແຮງງານ, ເຄີຍປະກາດຢ່າງໂດ່ງດັງວ່າ: "ການຕໍ່ສູ້ກັບພັກອະນຸລັກນິຍົມ" ແມ່ນເປົ້າໝາຍຂອງຕົນ.

ດັດຕັນ ເປັນລັດຖະມົນຕີທີ່ປະສົບຜົນສຳເລັດໃນລັດຖະບານອະນຸລັກນິຍົມຊຸດກ່ອນ ແລະ ດຳລົງຕຳແໜ່ງສຳຄັນໆ ເຊັ່ນ: ກະຊວງປ້ອງກັນປະເທດ ແລະ ກະຊວງພາຍໃນ, ແຕ່ເຂົາຖືກວິພາກວິຈານຢ່າງໜັກໃນການປະຕິບັດຕໍ່ຜູ້ຂໍລີ້ໄພຢ່າງບໍ່ມີການຜ່ອນຜັນໃດໆເລີຍ ໃນຖານະເປັນລັດຖະມົນຕີກະຊວງກວດຄົນເຂົ້າເມືອງ.

ການເມືອງຂອງອົດສະຕຣາລີຖືກຄອບງຳໂດຍພັກແຮງງານຝ່າຍຊ້າຍຂອງ ອັລບາເນຊີ ແລະພັກເສລີນິຍົມຝ່າຍຂວາຂອງ ດັດຕັນ ມາເປັນເວລາດົນນານ, ແຕ່ຄວາມຜິດຫວັງທີ່ເພີ່ມສູງຂຶ້ນໃນບັນດາຜູ້ມີສິດເລືອກຕັ້ງ ໄດ້ເຮັດໃຫ້ຜູ້ມີສິດເລືອກຕັ້ງເອກະລາດ ກ້າຊຸກຍູ້ໃຫ້ມີຄວາມໂປ່ງໃສຫຼາຍຂຶ້ນ ແລະ ຄວາມກ້າວໜ້າດ້ານດິນຟ້າອາກາດ; ການຢັ່ງຫາງສຽງສະແດງໃຫ້ເຫັນວ່າສະມາຊິກລັດຖະສະພາທີ່ບໍ່ຝັກໃຝ່ຝ່າຍໃດ 10 ຄົນ ຫຼື ຫຼາຍກວ່ານັ້ນ ສາມາດຖືສົມດຸນຂອງອຳນາດ, ເຮັດໃຫ້ການຈັດຕັ້ງລັດຖະບານສຽງສ່ວນໜ້ອຍ ມີຄວາມເປັນໄປໄດ້ສູງ.

ທັງສອງພັກເຫັນດີເປັນສ່ວນໃຫຍ່ໃນເລື່ອງປ້ອງກັນປະເທດ ແລະ ຄວາມໝັ້ນຄົງແຫ່ງຊາດ ໂດຍມຸ່ງໝັ້ນທີ່ຈະໃຫ້ອົດສະຕຣາລີ ເປັນພັນທະມິດທາງທະຫານທີ່ໃກ້ຊິດກັບສະຫະລັດ, ແຕ່ສອງຝ່າຍມີທັດສະນະທີ່ແຕກຕ່າງກັນຕໍ່ຈີນໃນໄລຍະຜ່ານມາ.

ອັລບາເນຊີ ໄດ້ເພີ່ມທະວີການພົວພັນກັບຈີນ ເຊິ່ງເປັນຄູ່ຮ່ວມມືການຄ້າທີ່ສຳຄັນ ແລະ ເດີນທາງໄປປັກກິ່ງໃນປີ 2023 ເຊິ່ງຖືເປັນການຢ້ຽມຢາມທີ່ສຳຄັນຄັ້ງທຳອິດຂອງອົດສະຕຣາລີໃນຮອບ 7 ປີ; ລັດຖະບານອະນຸລັກນິຍົມຊຸດກ່ອນ ໄດ້ວິພາກວິຈານຈີນຢ່າງຮຸນແຮງ, ຈີນກໍ່ໃຫ້ເກີດສົງຄາມການຄ້າທີ່ເຮັດໃຫ້ອົດສະຕຣາລີສູນເສຍເງິນຫຼາຍຕື້ໂດລາສະຫະລັດ ຈົນກະທັ້ງໄດ້ຮັບການແກ້ໄຂເມື່ອທ້າຍປີຜ່ານມາ.

# ລັດຖະບານມຽນມາ ຢືນຢັນຈັດການເລືອກຕັ້ງ ທັງເປີດເຜີຍແຜນເບື້ອງຕົ້ນ



(AFP) - ຜູ້ນຳລັດຖະບານມຽນມາຢືນຢັນວ່າ ຈະຈັດການເລືອກຕັ້ງທົ່ວໄປຄັ້ງໃໝ່ທີ່ໂປ່ງໃສ ໃນລະຫວ່າງທ້າຍເດືອນທັນວາປີນີ້ຫາກາງເດືອນມັງກອນປີໜ້າ.

ພົອ. ອາວຸໂສ ມິນ ອອງ ໄຫຼ ຜູ້ບັນຊາການທະຫານສູງສຸດ ແລະ ຜູ້ນຳລັດຖະບານມຽນມາ ກ່າວໃນພິທີສວນສະໜາມຂອງທະຫານເນື່ອງໃນວັນກອງທັບມຽນມາ ກົງກັບວັນພະຫັດທີ 27 ມີນາຜ່ານມາ ຢືນຢັນການກະກຽມໃຫ້ແກ່ການເລືອກຕັ້ງ "ທີ່ເສລີ, ມີກຽດ ແລະ ຍຸຕິທຳ" ພ້ອມທັງໃຫ້ຄຳໝັ້ນສັນຍາຈະໂອນອຳນາດໃຫ້ພັກການເມືອງທີ່ຊະນະການເລືອກຕັ້ງ; ພົອ.ອາວຸໂສ ມິນ ອອງ ໄຫຼ ກ່າວວ່າ: ທຸກພາກສ່ວນທີ່ກ່ຽວຂ້ອງ ພວມກະກຽມທີ່ຈຳເປັນສຳລັບການເລືອກຕັ້ງຄັ້ງນີ້ ໂດຍຈະເປັນການເລືອກຕັ້ງຫຼາຍພັກ, ເຊິ່ງມີທັງໝົດ 53 ພັກການເມືອງ ທີ່ໄດ້ລົງທະບຽນເພື່ອສົ່ງຜູ້ສະໝັກ.

ຜູ້ນຳລັດຖະບານມຽນມາ ກ່າວເມື່ອບໍ່ດົນມານີ້ວ່າ, ການເລືອກຕັ້ງທົ່ວໄປຈະຈັດຂຶ້ນໃນເດືອນທັນວາປີນີ້ ຫຼືບໍ່ເກີນເດືອນມັງກອນ 2026.

ຂະນະທີ່ສື່ມວນຊົນຫຼາຍແຫ່ງລາຍງານໂດຍອ້າງອີງຂໍ້ມູນຈາກລັດຖະບານມຽນມາວ່າ ການເລືອກຕັ້ງຈະແບ່ງອອກເປັນ 4 ໄລຍະ: ສອງໄລຍະທຳອິດຈະດຳເນີນໃນລະຫວ່າງອາທິດທີ 3 ຫາ 4 ຂອງເດືອນທັນວາ, ສ່ວນອີກສອງໄລຍະ ຈະດຳເນີນໃນອາທິດທີ 2 ຂອງເດືອນມັງກອນ 2026.

ນອກຈາກນີ້, ຈະມີການນຳໃຊ້ເຄື່ອງລົງຄະແນນສຽງແບບເອເລັກໂຕຣນິກອີກດ້ວຍ ໂດຍລັດຖະບານໃຫ້ເຫດຜົນວ່າ ຈະສາມາດປ້ອງກັນການທຸດຈະລິດ ແລະ ອາດໃຊ້ລະບົບເລືອກຕັ້ງແບບປະສົມ ທັງການແບ່ງເຂດ ແລະ ອັດຕາສ່ວນ.

# ຈີນ ຂໍຄວາມເຫັນປະຊາຊົນຕໍ່ຮ່າງກົດໝາຍຄວາມປອດໄພທາງອິນເຕີເນັດ




(Xinhua) - ວັນສຸກທີ 28 ມີນາຜ່ານມາ, ອົງການຄຸ້ມຄອງອິນເຕີເນັດຂອງຈີນ ໄດ້ເປີດເຜີຍຮ່າງກົດໝາຍຄວາມປອດໄພທາງອິນເຕີເນັດສະບັບປັບປຸງ ເພື່ອຂໍຄວາມເຫັນຈາກປະຊາຊົນ. ຮ່າງກົດໝາຍສະບັບປັບປຸງດັ່ງກ່າວ ໄດ້ຮັບການສ້າງຂຶ້ນເພື່ອຮັບປະກັນຄວາມສອດຄ່ອງ ແລະ ປະສານສົມທົບກັບກົດໝາຍອື່ນໆທີ່ກ່ຽວຂ້ອງ ແລະ ປັບປຸງລະບົບຄວາມຮັບຜິດຊອບທາງກົດໝາຍ, ອີງຕາມການລາຍງານຂອງສຳນັກງານບໍລິຫານອິນເຕີເນັດຂອງຈີນ.

ຮ່າງກົດໝາຍສະບັບນີ້ ມີຈຸດປະສົງເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ ແລະບັນດາອົງການຈັດຕັ້ງໃນຂົງເຂດອິນເຕີເນັດ ແລະ ປົກປ້ອງຄວາມໝັ້ນຄົງຂອງຊາດ ແລະ ຜົນປະໂຫຍດສາທາລະນະ.

ການປັບປຸງຕົ້ນຕໍປະກອບມີ: ຄວາມຮັບຜິດຊອບທາງກົດໝາຍທີ່ກ່ຽວຂ້ອງກັບຄວາມປອດໄພຂອງການດຳເນີນງານເຄືອຂ່າຍ, ຄວາມປອດໄພຂອງຂໍ້ມູນອິນເຕີເນັດ, ແລະ ຄວາມປອດໄພຂອງຂໍ້ມູນສ່ວນບຸກຄົນ ແລະ ຂໍ້ມູນສຳຄັນ; ເພີ່ມບົດບັນຍັດກ່ຽວກັບຄວາມຮັບຜິດຊອບທາງກົດໝາຍສຳລັບການຂາຍ ຫຼື ການສະໜອງອຸປະກອນເຄືອຂ່າຍທີ່ສຳຄັນ ແລະ ຜະລິດຕະພັນຄວາມປອດໄພທາງອິນເຕີເນັດທີ່ບໍ່ໄດ້ຮັບການຢັ້ງຢືນ ຫຼື ການທົດສອບຄວາມປອດໄພ ຫຼືບໍ່ປະຕິບັດຕາມຂໍ້ກຳນົດການຢັ້ງຢືນ ຫຼື ການທົດສອບຄວາມປອດໄພ.

ນອກຈາກນີ້, ຍັງຊີ້ແຈງເຖິງການຈັດການ ແລະການລົງໂທດຜູ້ດຳເນີນກິດຈະການພື້ນຖານໂຄງລ່າງຂໍ້ມູນທີ່ສຳຄັນ ທີ່ນຳໃຊ້ຜະລິດຕະພັນ ຫຼື ບໍລິການເຄືອຂ່າຍ ທີ່ບໍ່ໄດ້ຮັບການຢັ້ງຢືນຄວາມປອດໄພ ຫຼື ບໍ່ຜ່ານການກວດສອບດັ່ງກ່າວ.

# ອົງການນິຕິບັນຍັດຈີນ ປິດກອງປະຊຸມປະຈຳປີ

(Xinhua) - ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາຜູ້ແທນປະຊາຊົນທົ່ວປະເທດ (NPC) ຊຸດທີ XIV ເຊິ່ງເປັນອົງການນິຕິບັນຍັດສູງສຸດຂອງຈີນ ໄດ້ປິດລົງເມື່ອວັນອັງຄານທີ 11 ມີນາຜ່ານມາ ທີ່ຫໍສະພາປະຊາຊົນ, ນະຄອນຫຼວງປັກກິ່ງ; ໂດຍໄດ້ຮັບການມອບໝາຍຈາກປະທານ, ທ່ານ ຫຼີ ຫົງຈົ້ງ (Li Hongzhong) ຮອງປະທານສະພາຜູ້ແທນປະຊາຊົນທົ່ວປະເທດ ເປັນປະທານກອງປະຊຸມ, ເຂົ້າຮ່ວມມີທ່ານ ສີ ຈິ້ນຜິງ ປະທານປະເທດ, ທ່ານ ຫຼີ ສຽງ ນາຍົກລັດຖະມົນຕີ ແລະ ຜູ້ນຳທ່ານອື່ນໆ ລວມທັງສະມາຊິກ NPC ຈຳນວນ 2,884 ທ່ານ.



ກອງປະຊຸມໄດ້ລົງຄະແນນສຽງຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານຂອງລັດຖະບານ, ກົດໝາຍວ່າດ້ວຍສະມາຊິກສະພາຜູ້ແທນປະຊາຊົນທົ່ວປະເທດ ແລະ ສະພາຜູ້ແທນປະຊາຊົນທ້ອງຖິ່ນທຸກຂັ້ນ ສະບັບປັບປຸງ ເຊິ່ງທ່ານ ສີ ຈິ້ນຜິງ ໄດ້ລົງນາມໃນຄຳສັ່ງຂອງປະທານປະເທດ ເພື່ອປະກາດໃຊ້ກົດໝາຍດັ່ງກ່າວ, ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2024 ແລະ ຮ່າງແຜນການປີ 2025 ແລະ ອະນຸມັດແຜນການປີ 2025, ບົດລາຍງານການຈັດຕັ້ງປະຕິບັດງົບປະມານສູນກາງ ແລະ ທ້ອງຖິ່ນ ປີ 2024 ແລະ ຮ່າງແຜນການປີ 2025 ແລະ ອະນຸມັດງົບປະມານສູນກາງ ປີ 2025; ນອກຈາກນັ້ນ, ຍັງໄດ້ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານຂອງຄະນະປະຈຳ NPC, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ.

ໃນການກ່າວສູນທອນພິດຕໍ່ກອງປະຊຸມ, ທ່ານ ຫຼີ ຫົງຈົ້ງ ໄດ້ຮຽກຮ້ອງໃຫ້ຈັດຕັ້ງປະຕິບັດຕາມບັນດາມະຕິຕົກລົງຂອງກອງປະຊຸມຄັ້ງນີ້ຢ່າງເຂັ້ມງວດ ແລະ ບັນລຸບັນດາເປົ້າໝາຍ ແລະ ພາລະກິດຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ XIV (2021-2025) ຢ່າງມີຄຸນນະພາບສູງ ພາຍໃຕ້ການນຳພາຊີ້ນຳຢ່າງແຂງແຮງຂອງຄະນະບໍລິຫານງານສູນກາງພັກກອມມູນິດຈີນ ໂດຍມີສະຫາຍ ສີ ຈິ້ນຜິງ ເປັນແກນກາງ; ທ່ານຍັງຮຽກຮ້ອງໃຫ້ຍຶດໝັ້ນລະບອບປະຊາທິປະໄຕປະຊາຊົນຕະຫຼອດຂະບວນການ ໂດຍສຸມໃສ່ການຄຸ້ມຄອງກິດຈະການຂອງຈີນເປັນຢ່າງດີ ແລະ ປະຕິບັດວຽກງານຢ່າງບໍ່ຮູ້ຈັກເມື່ອຍ ເພື່ອສ້າງປະເທດຈີນໃຫ້ເຂັ້ມແຂງແລະກ້າວໄປສູ່ການຟື້ນຟູປະເທດຊາດໃນທຸກດ້ານ ໂດຍຜ່ານການພັດທະນາຈີນໃຫ້ທັນສະໄໝ.



ເຝົ້າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ບັນຫາ ແລະ ສິ່ງທ້າທາຍ ທີ່ບາງປະເທດລົງແກ້ໄຂ

ບົດຄວາມປະຈຳໜັງສືພິມ "ຜູ້ແທນປະຊາຊົນ" ສະບັບນີ້ ຂໍຊຸດໄງ້ໃຈ້ແຍກບົດຮຽນຂອງບາງປະເທດ ໃນສະໜາມຮົບຕ້ານໄພສໍ້ລາດບັງຫຼວງ. ເປັນຂ່າວອ່າວເກົ່າແຕ່ບົດຮຽນອາດຍັງໃໝ່ອ່ຽມສຳລັບຄວາມພະຍາຍາມຂອງບ້ານເຮົາ ໃນການຕໍ່ສູ້ຕ້ານພະຍາດສໍ້ລາດບັງຫຼວງທີ່ຊຳເຮື້ອມາເປັນເວລາຫຼາຍຝ້າຫຼ້າປີແລ້ວ.

ຢູ່ປະເທດບຸນກາລີ ມາດຕະການຈິງຈັງຕັ້ງໜ້າ ເພື່ອຈຳກັດ ແລະ ກ້າວໄປສູ່ຂັ້ນກຳຈັດພະຍາດສໍ້ລາດບັງຫຼວງ ໄດ້ເລີ່ມຂຶ້ນໃນຕົ້ນປີ 2015 (ໜັງສືພິມວຽງຈັນທາມ ວັນທີ 10 ເມສາ 2015) ໂດຍທາງລັດຖະບານຂອງປະເທດນີ້ ໄດ້ຮັບຮອງເອົາແຜນການຕ້ານການສໍ້ລາດບັງຫຼວງສຳລັບ 5 ປີ ຊຸດທຳອິດ, ແຜນດັ່ງກ່າວໄດ້ກຳນົດ 33 ມາດຕະການ ເພື່ອແກ້ໄຂບັນຫາສໍ້ລາດບັງຫຼວງໃນ 6 ຂົງເຂດຕົ້ນຕໍ ໂດຍເລັ່ງໃສ່ບັນດາພະນັກງານໃນທຸກໆລະດັບ ແຕ່ເນັ້ນບັນດາໂຕໃຫຍ່ໆ (ຂັ້ນສູງສຸດ). ວຽກທີ່ເປັນເປົ້າໝາຍຕົ້ນຕໍຂອງສະໜາມຮົບດັ່ງກ່າວແມ່ນ: ສ້າງຕັ້ງລະບົບຕ້ານການສໍ້ລາດບັງຫຼວງທີ່ມີປະສິດທິພາບ, ປາບປາມການສໍ້ລາດບັງຫຼວງໃນຂົງເຂດການເມືອງ, ປ້ອງກັນບໍ່ໃຫ້ມີພະຍາດສໍ້ລາດບັງຫຼວງໃນຂົງເຂດຍຸຕິທຳ, ໃນກະຊວງພາຍໃນແລະໃນບັນດາໜ່ວຍງານຕິດຕາມກວດກາ, ແກ້ໄຂການສໍ້ລາດບັງຫຼວງລະດັບຕ່ຳ ທີ່ເກີດຂຶ້ນໃນຊີວິດປະຈຳວັນ ແລະ ສຸດທ້າຍແມ່ນການສ້າງສະພາບແວດລ້ອມທີ່ກໍ່ໃຫ້ເກີດມີການສໍ້ລາດບັງຫຼວງ; ສະໜາມຮົບຕ້ານການສໍ້ລາດບັງຫຼວງຂອງປະເທດບຸນກາລີ ນັ້ນເນັ້ນການປະສານງານຢ່າງກົມກຽວລະຫວ່າງໜ່ວຍງານຮັບຜິດຊອບປະຕິບັດກົດໝາຍແລະການສ້າງຕັ້ງໜ່ວຍງານພຽງໜ່ວຍດຽວທີ່ມີສິດເດັດຂາດໃນການສອບສວນ, ໄຈ້ແຍກວັດຖຸຊັບສິນທີ່ພະນັກງານຂັ້ນສູງໄດ້ມາຄອບຄອງດ້ວຍການສໍ້ໂກງ. ທາງການປະເທດບຸນກາລີມີຄວາມເຊື່ອໝັ້ນວ່າ ແຜນການ 5 ປີ ເພື່ອຕ້ານການສໍ້ລາດບັງຫຼວງ ຈະຊ່ວຍໃຫ້ປະເທດສາມາດແກ້ໄຂປາກົດການຫຍໍ້ທໍ້ນີ້ ໄດ້ໃນລະດັບດຽວກັບຫຼາຍປະເທດສະມາຊິກສະຫະພາບເອີຣົບ (ອີຢູ EU).

ສະບັບປີ 2018, ການໃຫ້ສິນບົນມີໂທດຕິດຄຸກສູງສຸດ 7 ປີ ຫຼື ໄດ້ຮັບໂທດປັບໃໝ ຫຼື ໄດ້ຮັບໂທດທັງສອງຢ່າງ.

ສ່ວນເລື່ອງທີສອງສຸດທ້າຍໃນບົດນີ້ ແມ່ນຂ່າວຈາກໜັງສືພິມ "ຜູ້ແທນປະຊາຊົນ" ໃນສະບັບວັນທີ 7-9 ທັນວາ 2015 ໃສ່ຫົວຂໍ້ວ່າ "ໂທດສຸດຈະລິດ ອາດບໍ່ຖືກປະຫານຊີວິດຫາກສົ່ງຄືນຊັບສິນທີ່ສໍ້ໂກງ"ລາຍລະອຽດຂອງຂ່າວບອກວ່າໃນວັນທີ 20 ຕຸລາ 2015 ກອງປະຊຸມສະພາແຫ່ງຊາດຫວຽດນາມ ໄດ້ຮັບຮອງເອົາກົດໝາຍອາຍາສະບັບປັບປຸງ ທີ່ກຳນົດຫຼຸດໂທດປະຫານຊີວິດ ຖ້າສາມາດຄືນຢ່າງໜ້ອຍ 3/4 ຫຼື 75% ຂອງຊັບສິນທີ່ສໍ້ໂກງ. ນອກຈາກນັ້ນ, ກອງປະຊຸມຍັງໄດ້ມີມະຕິຍົກເລີກໂທດປະຫານຊີວິດ ສຳລັບຜູ້ກະທຳຜິດໃນ 7 ຄະດີ ຄື: ການປຸ້ນຈີ້ຊິງຊັບ; ການຈຳໜ່າຍສິນຄ້າປອມແປງ ເຊັ່ນ: ສະບຽງອາຫານ-ອາຫານປົນເປື້ອນ; ການຄອບຄອງຢາເສບຕິດທີ່ຜິດກົດໝາຍ; ການຍຶດເອົາຢາເສບຕິດ; ການທຳລາຍອາຄານ, ໂຄງການກໍ່ສ້າງ, ພາຫະນະທີ່ມີຄວາມສຳຄັນຕໍ່ຄວາມໝັ້ນຄົງຂອງຊາດ; ການຝ່າຝືນຄຳສັ່ງຂອງຜູ້ບັງຄັບບັນຊາ ແລະ ຂໍ້ທີ 7 ແມ່ນການຍອມຈຳນົນຕໍ່ສັດຕູ. ເຊັ່ນດຽວກັບຢູ່ໃນປະເທດຕ່າງໆ ເຊິ່ງໂດຍທົ່ວໄປແລ້ວບຸກຄົນທີ່ມີຄວາມຮັບຜິດຊອບທາງອາຍານັ້ນ ຕ້ອງເປັນຜູ້ທີ່ຢູ່ໃນເກນອາຍຸຜູ້ໃຫຍ່ ຫຼື ບັນລຸນິຕິພາວະ 18 ປີຂຶ້ນໄປ. ແຕ່ຢູ່ຫວຽດນາມນັ້ນ ໄດ້ມີການປັບຫຼຸດອາຍຸຂອງບຸກຄົນທີ່ມີຄວາມຮັບຜິດຊອບທາງອາຍາ ລົງເປັນແຕ່ 14-16 ປີ ໃນອາຊະຍາກຳດັ່ງຕໍ່ໄປນີ້: ຂົ່ມຂືນບຸກຄົນທີ່ມີອາຍຸຕ່ຳກວ່າ 16 ປີ, ການຮ່ວມເພດໂດຍການບັງຄັບກັບບຸກຄົນອາຍຸແຕ່ 13 ຫາ ຕ່ຳກວ່າ 16 ປີ, ການຄ້າມະນຸດ ບຸກຄົນທີ່ມີອາຍຸ 16 ປີ ແລະ ອາຊະຍາກຳແຂ່ງລົດທີ່ຜິດກົດໝາຍ. ກົດໝາຍອາຍາສະບັບປັບປຸງນີ້ ມີຜົນບັງຄັບໃຊ້ແຕ່ວັນທີ 1 ກໍລະກົດ 2016 ເປັນຕົ້ນມາ.







*# ບ່າວກະບື*

**ຖາມ:** "ຖ້າວ່າເດັກນ້ອຍຫົກຄົນ ແລະ ໝາອີກສອງໂຕ ກັ້ງຄັນຮົ່ມອັນດຽວ, ແລ້ວເຫດໃດຈຶ່ງບໍ່ມີຜູ້ໃດປຽກ?"

**ຕອບ:** "ບໍ່ປຽກກໍ່ເພາະວ່າຝົນບໍ່ຕົກ."

**ຖາມ:** "ແມ່ນຫຍັງທີ່ຍາມໃດກໍ່ປຽກສ່ຳເກົ່າ ເຖິງວ່າຝົນຈະເທລົງມາປານໃດກໍ່ຕາມ?"

**ຕອບ:** "ແມ່ນ້ຳ"

*# BAOKBU*

Q: "If six children and two dogs were under an umbrella, how come none of them get wet?"

A: "Because it wasn't raining."

Q: What doesn't get any wetter no matter how much it rains?

A: "Rivers".







1. ງານບຸນງານດອງ ເອົາຊອງແຂກມາບັນທຶກວ່າໃຜໃສ່ໜ້ອຍ
2. ຄິດເປັນເຈົ້າພາບແລ້ວຕ້ອງໃຈໃຫຍ່ແດ່ ເຮົາເຮັດບຸນເຮັດດອງຕາມຮີດຄອງບໍ່ແມ່ນງານຫາລາຍໄດ້ລະດົມທຶນໄດ໋

● ໂດຍ : ພູຜາ



## 3 ພາກສ່ວນ...

(ຕໍ່ຈາກໜ້າ 1)

(ສພຊ) - ເພື່ອປະກອບສ່ວນຊຸກຍູ້ການສ້າງຂະບວນການຂໍານັບຮັບຕ້ອນວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບ ຄົບຮອບ 64ປີ(5/4/1961-5/4/2025), ວັນທີ 2 ເມສາຜ່ານມາ ໄດ້ມີພິທີມອບ-ຮັບເສື້ອກິລາ ທີ່ໄດ້ຮັບການອຸປະຖຳຈາກບໍລິສັດ ແສງວິໄລ ມາຍນິງ ສາກົນ ຈຳກັດຜູ້ດຽວ ຈຳນວນ 50 ຜືນ, ຮ້ານ LIFEFOODBALLSHOP ຈຳນວນ 50 ຜືນ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ທີເຄພີ (TKP) ຈຳກັດ ມອບຕູ້ເຢັນ 1 ໜ່ວຍ; ຕາງໜ້າຮັບໂດຍທ່ານ ພົຈວ. ປອ. ມາລາ ວິລະຈິດ ຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ເຊິ່ງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ. ທ່ານ ພົຈວ. ປອ. ມາລາ ວິລະຈິດ ໄດ້ກ່າວສະແດງຄວາມຂອບໃຈ ແລະ ມອບໃບກຽດຕິຄຸນຂອງປະທານ ກປຊສ ເພື່ອຍ້ອງຍໍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ ແລະ ອຸປະຖຳຄັ້ງນີ້.

**(ນາງ ອາລິນ ສຸພົມມະປະດິດ)**

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ